# ທິດທາງແຫ່ງການເປັນຄູ່ຮ່ວມມື
## ກຳປູເຈຍ, ລາວ ແລະ ອາຊຽນ ຮ່ວມຢູ່ໃນ
## ອາຊີ ອາຄະເນອັນນຶ່ງອັນດຽວ

ບົດລາຍງານ
ຂອງໜ່ວຍຄົ້ນຄວ້າ ກ່ຽວກັບ ກຳປູເຈຍ ແລະ ລາວ

ກົວລາລຳເປີ, ມາເລເຊຍ

ວັນທີ 16 ພະຈິກ 1996

ໂຄງການ ກ່ຽວກັບ "ອາຊີ-ອາຄະເນ ຫລັງຈາກປີ 2000"
ສະໜັບສະໜູນໂດຍ : ສະຖາບັນຄົ້ນຄວ້ານະໂຍບາຍ, ມາເລເຊຍ

# ທິດທາງແຫ່ງການເປັນຄູ່ຮ່ວມມື
## ກຳປູເຈຍ, ລາວ ແລະ ອາຊຽນ ຮ່ວມຢູ່ໃນ
## ອາຊີ ອາຄະເນອັນນຶ່ງອັນດຽວ

ບົດລາຍງານ

ຂອງໜ່ວຍຄົ້ນຄວ້າ ກ່ຽວກັບ ກຳປູເຈຍ ແລະ ລາວ

ກົວລາລຳເປີ, ມາເລເຊຍ

ວັນທີ 16 ພະຈິກ 1996

ໂຄງການ ກ່ຽວກັບ “ອາຊີ-ອາຄະເນ ຫລັງຈາກປີ 2000”

ສະໜັບສະໜູນໂດຍ: ສະຖາບັນຄົ້ນຄວ້ານະໂຍບາຍ, ມາເລເຊຍ

# DICTATE OF PARTNERSHIP

## CAMBODIA, LAOS AND ASEAN IN ONE SOUTHEAST ASIA

REPORT OF THE
STUDY GROUP ON CAMBODIA LAOS (SGCL)

16 November 1996

# <u>ສາລະບານ</u>


ໜ້າ

ຄຳນຳ........................................................................ 1

ຄຳປາໄສຂອງ ພະນະທ່ານ ບຸນຍັງ ວໍລະຈິດ,

ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ........................ 4

ອະລຳພະບົດ................................................................ 9

ພາກທີ່ນຶ່ງ.................................................................... 17

ພາກທີ່ສອງ.................................................................. 22

ພາກທີ່ສາມ.................................................................. 27

# ຄຳນຳ

ລາຍງານຂອງຄະນະໜ່ວຍຄົ້ນຄວ້າ ກ່ຽວກັບ ລາວ ແລະ ກຳປູເຈຍ ທີ່ມີຫົວເລື່ອງວ່າ: "ທິດທາງແຫ່ງການເປັນຄູ່ຮ່ວມມື ກຳປູເຈຍ, ລາວ ແລະ ອາຊຽນ ຮ່ວມຢູ່ໃນ ອາຊີ ອາຄະເນອັນນຶ່ງອັນດຽວ" ສະບັບນີ້ ແມ່ນຜົນງານລວມ ຂອງບັນດາສະມາຊິກໜ່ວຍຄົ້ນຄວ້າ ທີ່ມາຈາກ ສປປ ລາວ, ລາດຊະອານາຈັກ ກຳປູເຈຍ ແລະ ບັນດາປະເທດ ສະມາຊິກ ອາຊຽນ ຜູ້ເຊິ່ງມີປະສົບການດ້ານວຽກງານທີ່ກ່ຽວຂ້ອງ ໂດຍກົງກັບນະໂຍບາຍພາຍໃນ ແລະ ຕ່າງປະເທດຂອງລັດຖະບານ ໃນປະຈຸບັນ ແລະ ໃນອະດີດ ທັງມີບົດຮຽນຄົ້ນຄວ້າທາງດ້ານຍຸດທະສາດ ກ່ຽວກັບບັນຫາ ສັນຕິພາບ, ສະຖຽນລະພາບ ແລະ ການພົວພັນຮ່ວມມືພັດທະນາທາງດ້ານເສດຖະກິດ-ສັງຄົມ. ໜ່ວຍຄົ້ນຄວ້າດັ່ງກ່າວ ໄດ້ເຕົ້າໂຮມກັນຄັ້ງທຳອິດຢູ່ ມະນີລາ, ສາທາລະນະລັດ ຟີລິບປິນ, ຫລັງຈາກນັ້ນກໍ່ໄດ້ດຳເນີນການທັດສະນະສຶກສາຢູ່ ສປປ ລາວ, ກຳປູເຈຍ ແລ້ວໄດ້ໄປສະຫລຸບຮັບຮອງເອົາບົດລາຍງານສະບັບນີ້ຢູ່ ກົວລາລຳເປີ, ປະເທດມາເລເຊຍ ໃນກອງປະຊຸມສາກົນ "ກ້າວເຂົ້າສູ່ ອາຊີ ອາຄະເນ ອັນນຶ່ງອັນດຽວ ໃນສັດຕະວັດທີ 21" ຈັດໂດຍ ສະຖາບັນ ຄົ້ນຄວ້າ ດ້ານນະໂຍບາຍ ຂອງ ມາເລເຊຍ ໃນວັນທີ 16 ພະຈິກ 1996 ພາຍໃຕ້ການ ອຸປະຖຳຂອງ ທ່ານ ອານວາຣ໌ ອິບຣາຮິມ, ຮອງນາຍົກ ລັດຖະມົນຕີ ມາເລເຊຍ ແລ້ວກໍ່ໄດ້ນຳສົ່ງລາຍງານໄປຍັງບັນດາຜູ້ນຳຂອງປະເທດສະມາຊິກອາຊຽນ.

ທ່ານ ບຸນຍັງ ວໍລະຈິດ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມນີ້ ກໍ່ໄດ້ກ່າວຄຳປາໄສ ສະແດງຄວາມຊົມເຊີຍ ຕໍ່ຜົນງານຂອງສະມາຊິກໜ່ວຍຄົ້ນຄວ້າດັ່ງກ່າວ.

ຈຸດປະສົງຂອງການສ້າງບົດລາຍງານນີ້ ແມ່ນເພື່ອຄົ້ນຄວ້າ, ຊອກຮູ້ຄວາມເປັນຈິງຂອງລາວ ແລະ ກຳປູເຈຍ ແນໃສ່ຊ່ວຍເຫລືອທັງສອງປະເທດນີ້ ກະກຽມເຂົ້າເປັນສະມາຊິກຂອງອາຊຽນ ໃນອະນາຄົດຂ້າງໜ້າ. ການຄົ້ນຄວ້າລັກສະນະນີ້ ໄດ້ດຳເນີນມາກ່ອນແລ້ວ ສຳລັບຫວຽດນາມ ເຊິ່ງກໍ່ໄດ້ກາຍເປັນສະມາຊິກອາຊຽນ ໃນປີ 1995; ສ່ວນມຽນມາ ນັ້ນ ກໍ່ໄດ້ຢູ່ໃນໂຄງການຄົ້ນຄວ້າສະເພາະ. ທັງໝົດນີ້ກໍ່ແມ່ນຄວາມພະຍາຍາມເພື່ອຢາກເຮັດໃຫ້ ອາຊີ ອາຄະເນ ກາຍເປັນສະມາຄົມປະຊາຊາດ ອາຊີ ອາຄະເນ ອັນປະກອບດ້ວຍ 10 ປະເທດ.

ບົດລາຍງານສະບັບນີ້ ໄດ້ສັງລວມບັນຫາ ດ້ວຍການສັງເກດຕິລາຄາສາຍພົວພັນແບບ ພາວະວິໄສ ດ້ວຍການມີທັດສະນະວິໄສ ສຳລັບໄລຍະສະເພາະໜ້າ ແລະ ຍາວນານ. ໃນນັ້ນໄດ້ມີການວິໄຈ ເຖິງການຂະຫຍາຍຕົວແຫ່ງການພົວພັນລະຫວ່າງປະເທດໃນພາກພື້ນ ພາຍຫລັງການປ່ຽນແປງໃຫມ່ຂອງສະພາບການໂລກ ເຊິ່ງມີທັງ ກາລະໂອກາດ ແລະ ສິ່ງທ້າທາຍ. ສະມາຊິກໜ່ວຍຄົ້ນຄວ້າໄດ້ຫລິງເຫັນສະພາບແວດລ້ອມທີ່ເອື້ອອຳນວຍຂອງພາກພື້ນ ອາຊີ ອາຄະເນ ທີ່ໄດ້ເປີດກວ້າງການພົວພັນ ເພື່ອຜົນປະໂຫຍດຂອງແຕ່ລະປະເທດເພື່ອການດຳລົງຄົງຕົວຢູ່ຮ່ວມກັນ ໂດຍສັນຕິ ແລະ ພ້ອມກັນພັດທະນາ ເຊິ່ງຈະເປັນພື້ນຖານຄ້ຳປະກັນໃຫ້ແກ່ ສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື, ເຖິງວ່າບັນດາປະເທດໃນພາກພື້ນນີ້ ຈະມີເງື່ອນໄຂປະຫວັດສາດ, ວັດທະນະທຳ ແລະ ລະດັບການພັດທະນາທາງດ້ານເສດຖະກິດ-ສັງຄົມທີ່ແຕກຕ່າງກັນ.

ໜ່ວຍຄົ້ນຄວ້ານີ້ ໄດ້ສະຫລຸບໃຫ້ເຫັນເຖິງສະພາບຂໍ້ສະດວກ, ຂໍ້ຫຍຸ້ງຍາກຂອງທັງ ສປປ ລາວ ແລະ ລາດຊະອານາຈັກ ກຳປູເຈຍ ໃນຂະບວນວິວັດ ແຫ່ງການກຽມເຂົ້າອາຊຽນ ເຊິ່ງໃນນັ້ນໄດ້ມີຂໍ້ສະເໜີແນະຕ່າງໆ ທີ່ສອດຄ່ອງກັບສະພາບຄວາມຮຽກຮ້ອງຕ້ອງການຂອງທັງ

ສອງປະເທດນີ້ ເພື່ອເຮັດໃຫ້ ບັນດາປະເທດອາຊຽນ, ປະເທດທີ່ໃຫ້ການຊ່ວຍເຫລືອ ແລະ ອົງການຈັດຕັ້ງ ສາກົນຕ່າງໆ ປະກອບສ່ວນຊ່ວຍເຫລືອເພື່ອໃຫ້ ລາວ ແລະ ກຳປູເຈຍ ສາມາດຍົກລະດັບຄວາມສາມາດໃນການເຂົ້າຮ່ວມເຄື່ອນໄຫວກັບອາຊຽນ ໂດຍຕ່າງຝ່າຍຕ່າງມີຜົນປະໂຫຍດ.

ໃນຖານະທີ່ເປັນສະມາຊິກຂອງຫນ່ວຍຄົ້ນຄວ້າ ກ່ຽວກັບ ລາວ ແລະ ກຳປູເຈຍ ໃນໄລຍະຜ່ານມາ, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ສະຖາບັນ ຄົ້ນຄວ້ານະໂຍບາຍ "ກາຈຽນ ດາຊາ" ແຫ່ງ ມາເລເຊຍ ທີ່ໄດ້ໃຫ້ການອຸປະຖຳໃນການແປ ບົດລາຍງານອັນສຳຄັນນີ້ ຈາກພາສາອັງກິດ ເປັນພາສາລາວ ເພື່ອຈະໄດ້ນຳອອກສູ່ສາຍຕາຂອງປະຊາຊົນລາວ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈ "ທິດທາງແຫ່ງການເປັນຄູ່ຮ່ວມມື ກຳປູເຈຍ, ລາວ ແລະ ອາຊຽນ ຮ່ວມຢູ່ໃນ ອາຊີ ອາຄະເນອັນນຶ່ງອັນດຽວ".

ພົງສະຫວັດ ບຸບຜາ
ຮອງລັດຖະມົນຕີ ກະຊວງການຕ່າງປະເທດ

## ບົດປາໄສຂອງ ທ່ານ ບຸນຍັງ ວໍລະຈິດ
## ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ
## ກ່າວຕໍ່ກອງປະຊຸມສາກົນ ພາຍໃຕ້ຫົວເລື້ອງ
## "ການກ້າວສູ່ອາຊີອາຄະເນອັນດຽວ ໃນສັດຕະວັດທີ່ 21"
## ທີ່ ກົວລາລຳເປີ (16 ພະຈິກ1996)

---

- ພະນະທ່ານ ຮອງນາຍົກລັດຖະມົນຕີ ອານວາ ອິບຣາຮິມ
- ພະນະທ່ານ,
- ທ່ານ ຍິງ ແລະ ທ່ານ ຊາຍ

ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ແລະ ຮູ້ສຶກເປັນກຽດອັນສູງ ທີ່ໄດ້ຮັບຄຳເຊີນຂອງພະນະທ່ານ ຮອງນາຍົກ ອານວາ ອິບຣາຮິມ ແຫ່ງ ມາເລເຊຍ ມາກ່າວປາໄສໃນກອງປະຊຸມສາກົນ "ການກ້າວສູ່ອາຊີອາຄະເນອັນດຽວໃນສັດຕະວັດທີ່ 21" ເຊິ່ງຈັດຂຶ້ນຢູ່ ນະຄອນຫລວງ ກົວລາລຳເປີ ທີ່ສວຍງາມ ແຫ່ງປະເທດມາເລເຊຍ.

ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນມາເລເຊຍ ທີ່ໄດ້ໃຫ້ການຕ້ອນຮັບອັນອົບອຸ່ນ ແລະ ສ້າງເງື່ອນໄຂອັນສະດວກໃຫ້ແກ່ຂ້າພະເຈົ້າ ແລະ ຄະນະຈາກ ສປປ ລາວ ມາຮ່ວມກອງປະຊຸມ ທີ່ມີຄວາມໝາຍສຳຄັນໃນຄັ້ງນີ້. ພ້ອມກັນນີ້ ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ມາຍັງຄະນະຈັດຕັ້ງກອງປະຊຸມ, ບັນດາທ່ານຜູ້ຊົງຄຸນນະວຸດທິທຸກຄົນ ທີ່ໄດ້ປະກອບສ່ວນທາງດ້ານສະຕິປັນຍາ ແລະ ຄວາມພະຍາຍາມ ຈັດຕັ້ງໜ່ວຍງານສຶກສາ ກ່ຽວກັບກຳປູເຈຍ

ແລະ ລາວ ຈົນໄດ້ຮັບຜົນສຳເລັດ ໃນການຮ່າງລາຍງານ ເພື່ອນຳສະເໜີຕໍ່ບັນດາຜູ້ນຳຂອງປະເທດສະມາຊິກ ອາຊຽນ.

ທ່ານ ປະທານ

ກາງເດືອນຕຸລາແລ້ວນີ້ ຂ້າພະເຈົ້າໄດ້ມີໂອກາດພົບປະ ແລະ ແລກປ່ຽນຄວາມເຫັນກັບຄະນະໜ່ວຍງານ ສຶກສາກ່ຽວກັບ ກຳປູເຈຍ ແລະ ລາວ ຢູ່ ທີ່ວຽງຈັນ. ຄະນະໜ່ວຍງານດັ່ງກ່າວຍັງໄດ້ແລກປ່ຽນທັດສະນະ ແລະ ຄຳຄິດເຫັນກັບທ່ານປະທານປະເທດ ໜູຮັກ ພູມສະຫວັນ, ລັດຖະມົນຕີການຕ່າງປະເທດ, ເຈົ້າໜ້າທີ່ຂັ້ນສູງ ແລະ ນັກວິຊາການຂອງລາວ, ນອກນັ້ນ ກໍ່ໄດ້ສຳພັດ ແລະ ຮູ້ເຫັນສະພາວະຄວາມເປັນຈິງຂອງ ສປປ ລາວ ອັນໄດ້ເຮັດໃຫ້ຕ່າງຝ່າຍຕ່າງມີຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ຢ່າງເລິກເຊິ່ງ ແລະ ເປັນໂອກາດໃຫ້ສະມາຊິກໜ່ວຍງານດັ່ງກ່າວ ເຂົ້າໃຈເນື້ອແທ້ ແລະ ແນວຄິດຈິດໃຈຂອງຄົນລາວຫລາຍຂຶ້ນ ເປັນຕົ້ນແມ່ນ ເຂົ້າໃຈກ່ຽວກັບການກຽມເຂົ້າເປັນສະມາຊິກອາຊຽນ, ລະບົບ ແລະ ວິທີເຮັດວຽກ, ລະດັບການພັດທະນາເສດຖະກິດສັງຄົມ, ທ່າແຮງ ແລະ ຂໍ້ຈຳກັດທາງດ້ານເສດຖະກິດຂອງ ສປປ ລາວ. ຂ້າພະເຈົ້າຂໍເນັ້ນຄືນວ່າ ນະໂຍບາຍຕ່າງປະເທດຂອງ ສປປ ລາວ ແມ່ນສັນຕິພາບ ເອກະລາດ, ມິດຕະພາບ ແລະ ການຮ່ວມມື, ໃນນັ້ນ ອາຊີອາຄະເນອັນດຽວກໍ່ນອນຢູ່ໃນເປົ້າໝາຍຂອງລັດຖະບານລາວ ເຊິ່ງກໍໄດ້ເຂົ້າຮ່ວມສົນທິສັນຍາໄມຕີຈິດ ແລະ ການຮ່ວມມື ແລະ ໄດ້ກາຍເປັນຜູ້ສັງເກດການອາຊຽນປີ 1992 ເປັນຕົ້ນມາ.

ເຖິງວ່າໃນສະພາບການຂອງໂລກ ແລະ ພາກພື້ນ ປະຈຸບັນມີສິ່ງທ້າທາຍຫລາຍອັນ ໃຫ້ແກ່ການຢູ່ຮ່ວມກັນຢ່າງສັນຕິ ແລະ ພ້ອມກັນພັດທະນາ, ແຕ່ພວກເຮົາກໍເຫັນໄດ້ເຖິງສະພາບແວດລ້ອມ ທີ່ເອື້ອອຳ

ນວຍ ໃຫ້ພາກພື້ນອາຊີອາຄະເນ ໄດ້ເປີດກວ້າງການພົວພັນຮ່ວມມື ເພື່ອຜົນປະໂຫຍດລວມກັນ. ບັນດາປະເທດໃນອາຊີອາຄະເນ ໄດ້ມີເງື່ອນໄຂປະຫວັດສາດ, ວັດທະນະທຳ ແລະ ລະດັບການຂະຫຍາຍຕົວດ້ານເສດຖະກິດແຕກຕ່າງກັນ ເຊິ່ງອັນນັ້ນກໍບໍ່ເປັນສິ່ງກີດຂວາງການພົວພັນຮ່ວມມືໃຫ້ແໜ້ນແຟ້ນ ເພື່ອການພັດທະນາແຕ່ລະປະເທດ.

ລັດຖະບານ ສປປ ລາວ ຕີລາຄາສູງຕໍ່ຂໍ້ລິເລີ່ມຂອງນາຍົກລັດຖະມົນຕີ ດຣ. ມະຮາເທັຍ ໂມຮາເມດ ທີ່ໄດ້ຖືກຮັບຮອງເອົາໃນກອງປະຊຸມສຸດຍອດອາຊຽນ ເມື່ອເດືອນ ທັນວາ 1995 ຢູ່ ບາງກອກ ກ່ຽວກັບໂຄງການສ້າງເສັ້ນທາງລົດໄຟ ເຊື່ອມຕໍ່ຈາກສິງກະໂປ ໄປເຖິງຄຸນມິງ ສ.ປ. ຈີນ ໂດຍຜ່ານ ສປປ ລາວ ກໍຄືໂຄງການອາຊຽນ ເພື່ອການຮ່ວມມືພັດທະນາອ່າງແມ່ນ້ຳຂອງ.

ພວກຂ້າພະເຈົ້າ ມີທັດສະນະວິໄສວ່າ ການຮ່ວມມືພັດທະນາເສດຖະກິດເປັນເງື່ອນໄຂພື້ນຖານຄ້ຳປະກັນໃຫ້ແກ່ສັນຕິພາບ ແລະ ສະຖຽນລະພາບ, ພ້ອມດຽວກັນສັນຕິພາບ ແລະ ສະຖຽນລະພາບ ໃນພາກພື້ນກໍແມ່ນສິ່ງຈຳເປັນ ຕໍ່ການພັດທະນາຂອງແຕ່ລະປະເທດ ໃນອາຊີອາຄະເນ. ເວທີປຶກສາຫາລືຂອງອາຊຽນ ທີ່ມີການເຂົ້າຮ່ວມຢ່າງຕັ້ງໜ້າຂອງບັນດາສະມາຊິກອາຊຽນ, ບັນດາຜູ້ສັງເກດການອາຊຽນ ແລະ ບັນດາປະເທດຄູ່ເຈລະຈາຂອງອາຊຽນ ນັ້ນໄດ້ເປັນການຢັ້ງຢືນໃຫ້ເຫັນເຖິງຄວາມພະຍາຍາມລວມໃນການສ້າງພື້ນຖານ ແຫ່ງການສ້າງຄວາມໄວ້ເນື້ອເຊື່ອໃຈກັນ ເພື່ອຄວາມໝັ້ນຄົງ ໃນພາກພື້ນ ຕາມທ່າອ່ຽງຂອງຍຸກສະໄໝ.

**ຮ່າງບົດລາຍງານກ່ຽວກັບທັດສະນະວິໄສ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກກໍຄືຄວາມຕ້ອງການການຮ່ວມມື ແລະ ການຊ່ວຍເຫລືອຂອງ ສປປ ລາວ ໃນໄລຍະກ່ອນ ແລະ ຫລັງເຂົ້າເປັນສະມາຊິກອາຊຽນ ຂອງ ສປປ ລາວ ທີ່ໄດ້ຖືກພິຈາລະນາ ເພື່ອນຳສະເໜີຕໍ່ບັນດາຜູ້ນຳ ກໍຄືລັດ**

ຖະບານຂອງບັນດາປະເທດສະມາຊິກອາຊຽນ ນັ້ນ ເຫັນວ່າແທດເໝາະກັບສະພາບການຕົວຈິງ ຂອງປະເທດພວກຂ້າພະເຈົ້າໃນປະຈຸບັນ.

ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ຕໍ່ຄວາມພະຍາຍາມ ແລະ ການຮ່ວມມືອັນໃກ້ຊິດຂອງຄະນະໜ່ວຍງານສຶກສາ ກ່ຽວກັບລາວ ແລະ ກຳປູເຈຍ ຊຶ່ງໄດ້ດຳເນີນມາແຕ່ເດືອນ ກໍລະກົດ 1996 ເຊິ່ງເຊື່ອວ່າ ລາຍງານທີ່ເຮັດຂຶ້ນ ພ້ອມດ້ວຍຂໍ້ສະເໜີແນະຕ່າງໆ ທີ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງປະຊາຊົນລາວ ນັ້ນ ຈະຊ່ວຍເຮັດໃຫ້ບັນດາປະເທດອາຊຽນ ກໍຄືບັນດາປະເທດອື່ນໆ ແລະ ອົງການຈັດຕັ້ງສາກົນ ທີ່ມີເຈດຕະນາດີໃຫ້ການສະໜັບໜູນ ເພື່ອຊຸກຍູ້ເຮັດໃຫ້ລະດັບການພັດທະນາຂອງ ສປປ ລາວ ກ້າວໄປສູ່ລະດັບສູງກວ່າເກົ່າ ເພື່ອເສີມຂະຫຍາຍຄວາມສາມາດ ໃນການເຂົ້າຮ່ວມຢ່າງເຕັມສ່ວນ ແລະ ຫ້າວຫັນໃນອາຊຽນ.

ໃນໂອກາດນີ້ ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຢ່າງຈິງໃຈມາຍັງ ພະນະທ່ານ ຮອງນາຍົກລັດຖະມົນຕີ, ອານວາ ອິບຣາຮີມ ທີ່ໄດ້ຮັບພາລະດ້ວຍຕົນເອງ ສະເໜີບົດລາຍງານຂອງໜ່ວຍງານສຶກສາ ກ່ຽວກັບກຳປູເຈຍ ແລະ ລາວ, ແລະ ລາຍງານຂອງກຸ່ມໜ່ວຍງານ ອາຊີ ອາຄະເນ.

ໃນຖານະເປັນສ່ວນນຶ່ງທີ່ຕັດແຍກອອກບໍ່ໄດ້ ຂອງວົງຄະນາຍາດອາຊີ ອາຄະເນ, ສປປ ລາວ ມີເຈດຕະນາລົມອັນແນ່ວແນ່ ທີ່ຈະຮ່ວມມືກັບທຸກປະເທດໃນພາກພື້ນ ເພື່ອພ້ອມກັນພັດທະນາ ແລະ ປົກປັກຮັກສາສິດຜົນປະໂຫຍດຮ່ວມກັນ ແນໃສ່ເຮັດໃຫ້ພາກພື້ນນີ້ມີສັນຕິພາບ, ສະຖຽນລະພາບ ແລະ ຄວາມວັດທະນາຖາວອນ ຕະຫລອດໄປ.

ຂອບໃຈ.

## ອະລຳພະບົດ

ການອະວາສານ ຂອງສົງຄາມເຢັນ ໄດ້ສ້າງທັງກາລະໂອກາດ ແລະ ຄວາມທ້າທາຍຫລາຍປະການແກ່ອາຊີ ອາຄະເນ.

ບັນດາປະເທດໃນພາກພື້ນ ໄດ້ມີກາລະໂອກາດ ເພື່ອຫັນປ່ຽນ ຈາກແບບແຜນດຳລົງຊີວິດ ທີ່ຖືກຄອບງຳໄປດ້ວຍຄວາມຂັດແຍ່ງ ແລະ ຄວາມເຄັ່ງຕຶງຕ່າງໆ ນາໆ, ໄປສູ່ການນຳໃຊ້ຊັບພະຍາກອນຫລາຍຂຶ້ນ ກວ່າເກົ່າ ເຂົ້າໃນພາລະກິດ ແຫ່ງການພັດທະນາເສດຖະກິດ ແລະ ສັງ ຄົມ, ໄປສູ່ການເສີມຂະຫຍາຍການຮ່ວມມື ກັບບັນດາປະເທດເພື່ອນມິດ ແລະ ປະເທດໃກ້ຄຽງ ແລະ ໄປສູ່ການສົ່ງເສີມ ການຮ່ວມມືໃນພາກພື້ນ ໃນການຊອກສະແຫວງຫາ ສັນຕິພາບ ອັນຍາວນານ ແລະ ຄວາມຈະ ເລີນຮຸ່ງເຮືອງຮ່ວມກັນ.

ໃນໄລຍະບໍ່ເທົ່າໃດປີທີ່ຜ່ານມານີ້, ທົ່ວພາກພື້ນ ໄດ້ຈັບເອົາບາງ ກາລະໂອກາດ ຈາກການປ່ຽນແປງສະພາວະຂອງໂລກ ແລະ ຂອງພາກ ພື້ນ. ເສດຖະກິດສ່ວນຫລາຍຂອງພາກພື້ນ ຍັງຄົງກ້າວເດີນໄປໜ້າຢ່າງ ໄວວາ ຊຶ່ງໄດ້ເສີມສ້າງຖານະຂອງ ອາຊີ ອາຄະເນ ໃຫ້ເປັນນຶ່ງໃນຈຳ ນວນໃຈກາງທີ່ເຂັ້ມແຂງ ຂອງການເຄື່ອນໄຫວ ແລະ ການຂະຫຍາຍຕົວ ດ້ານເສດຖະກິດ ຢູ່ໃນໂລກ. ການຮ່ວມມືໃນພາກພື້ນ ໄດ້ຮັບການເປີດ ກວ້າງ ໂດຍການຮັບເອົາ ຫວຽດນາມ ເຂົ້າອາຊຽນ, ການລໍເຂົ້າເປັນສະ ມາຊິກຂອງ ກຳປູເຈຍ ແລະ ລາວ ທີ່ຈະມີຂຶ້ນ ໃນປີ 1997 ແລະ ໂດຍ ຄວາມຫວັງທີ່ຈະເຫັນ ມຽນມາ ເຂົ້າຮ່ວມສະມາຄົມ ພາຍໃນປີ 2000. ການຮ່ວມມື ໃນພາກພື້ນຍັງໄດ້ຮັບການພັດທະນາ ໃນທາງເລິກອີກ ໂດຍ ການເລັ່ງລັດ ສືບຕໍ່ດຳເນີນ ການສ້າງຕັ້ງເຂດການຄ້າເສລີ ອາຊຽນ ( AFTA = ASEAN Free Trade Area ) ແລະ ການສ້າງເງື່ອນໄຂ ໃຫ້ ຫວຽດນາມ ໄດ້ເຂົ້າຮ່ວມກັບຂະບວນການດັ່ງກ່າວ. ພາລະບົດບາດ

ຂອງພາກພື້ນ ໃນຖານະເປັນນັກເຄື່ອນໄຫວດ້ານການທູດ ທີ່ມີອິດທິພົນ ເພີ່ມຂຶ້ນເລື້ອຍໆ ໄດ້ຮັບການເຊີດຊູ ແລະ ເສີມສ້າງ ໂດຍຜ່ານການຈັດ ຕັ້ງເວທີປຶກສາຫາລືພາກພື້ນອາຊຽນ (ARF), ການເຂົ້າຮ່ວມວຽກງານ ຂອງການຮ່ວມມືດ້ານເສດຖະກິດຢູ່ ອາຊີ-ປາຊີຟິກ (APEC) ຢ່າງຫ້າວ ຫັນ ແລະ ການລິເລີ່ມ ຈັດຕັ້ງກອງປະຊຸມສຸດຍອດ ອາຊີ-ຢູໂຣບ (ASEM) ຂອງ ອາຊຽນ.

ໃນຂະນະດຽວກັນນັ້ນ, ບັນດາປະເທດ ໃນພາກພື້ນກໍ່ໄດ້ປະ ເຊີນກັບຄວາມທ້າທາຍ ຫລາຍປະການ. ອັນທໍາອິດແມ່ນຄວາມບໍ່ແນ່ ນອນທີ່ເກີດຂຶ້ນຈາກການປ່ຽນແປງສາຍສໍາພັນ ລະຫວ່າງມະຫາອໍານາດ ຕ່າງໆ, ການກໍາເນີດເກີດຂຶ້ນໃໝ່ຂອງບັນດາ ມະຫາອໍານາດລະດັບພາກ ພື້ນຢູ່ ອາຊີ, ແລະ ຄວາມຂັດແຍ່ງຕ່າງໆຢູ່ໃນລະບົບ ເສດຖະກິດໂລກ. ອັນທີ່ສອງໄດ້ແກ່ ການປາກົດຕົວຂອງບໍ່ເກີດໃໝ່ ແຫ່ງຄວາມຂັດແຍ່ງ ແລະ ຄວາມເຄັ່ງຕຶງ ນັບແຕ່ການເສີມສ້າງກໍາລັງອາວຸດ ແລະ ການເຂົ້າ ຫາແຫຼ່ງຊັບພະຍາກອນຕ່າງໆ ໄປເຖິງການເຄື່ອນຍ້າຍຂອງໝູ່ປະຊາ ຊົນ, ສິນຄ້າ ແລະ ຢາເສບຕິດຂ້າມແດນ ແບບຜິດກົດໝາຍ. ອັນທີ່ສາມ ໄດ້ແກ່ສິ່ງທີ່ສ່ວນລວມເອີ້ນກັນວ່າ "ຄວາມທ້າທາຍ ແຫ່ງຜົນສໍາເລັດ".

ການຂະຫຍາຍສະມາຊິກ ຂອງອາຊຽນ ໃນປະຈຸບັນ ແລະ ອະ ນາຄົດ ໄດ້ສ້າງບັນຫາຈໍານວນນຶ່ງ ກ່ຽວກັບອານາຄົດ ໄລຍະໃກ້ ແລະ ຍາວນານ ຂອງສະມາຄົມ. ອັນນຶ່ງ ແມ່ນເຮັດແນວໃດ ອາຊຽນ ຈຶ່ງຈະສາ ມາດເປີດກວ້າງ ແລະ ລົງເລິກການຮ່ວມມື ໃນພາກພື້ນ ພ້ອມໆກັນ ດ້ວຍຜົນສໍາເລັດ ທີ່ເປັນໜ້າເພິ່ງພໍໃຈ ຢູ່ໃນຄວາມພະຍາຍາມ ທັງສອງ ຢ່າງ. ອັນນຶ່ງອີກກໍແມ່ນເຮັດແນວໃດ ອາຊຽນ ຈຶ່ງຈະສາມາດຂະຫຍາຍ ຖັນແຖວສະມາຊິກຂອງຕົນ ແລະ ເສີມສ້າງສະຕິ ແຫ່ງຄວາມເປັນອັນນຶ່ງ ອັນດຽວ ຂອງພາກພື້ນ ລະຫວ່າງບັນດາສະມາຊິກທັງເກົ່າ ແລະ ໃໝ່. ອັນສຸດທ້າຍ ແມ່ນເຮັດແນວໃດ, ໃນດ້ານນຶ່ງ, ຈຶ່ງຈະສາມາດຊຸກຍູ້ ບັນ

ດາປະເທດອາຊຽນ ທີ່ມີຄວາມກ້າວໜ້າທາງດ້ານເສດຖະກິດ ແລະ ເຕັກໂນໂລຊີ ກວ່າໝູ່ ໃຫ້ເພີ່ມທະວີ ການສ້າງຄວາມກ້າວໜ້າ ໃນການພັດທະນາ ເສດຖະກິດ ແລະ ເຕັກໂນໂລຊີ ຂຶ້ນຕື່ມ ໃນເມື່ອຜົນປະໂຫຍດຂອງຊາດ ແລະ ການແຂ່ງຂັນສາກົນທາກບັງຄັບ ໃຫ້ກະທຳເຊັ່ນນັ້ນ, ແລະ ໃນດ້ານ ນຶ່ງອີກກໍແມ່ນເຮັດແນວໃດ ຈຶ່ງຈະສາມາດ ເກັບກ່ຽວເອົາຜົນປະໂຫຍດ ຈາກຄວາມຂະຫຍັນ ຂອງປະເທດເຫຼົ່ານັ້ນ ເພື່ອພາລະກິດ ແຫ່ງການອະພິວັດຂອງພາກພື້ນ (regionalism), ເພື່ອຊ່ວຍຮັບປະກັນ ບໍ່ໃຫ້ຊ່ອງຫວ່າງກວ້າງອອກ ລະຫວ່າງປະເທດເຫຼົ່ານັ້ນ ກັບບັນດາປະເທດເພື່ອນບ້ານອື່ນໆ ທີ່ມີລະດັບການພັດທະນາຕ່ຳກວ່າ ແລະ ບໍ່ໃຫ້ຜົນສຳເລັດຂອງເຂົາເຈົ້າ ສ້າງຄວາມເສຍຫາຍ ໃຫ້ແກ່ຄວາມມຸ້ງຫວັງຂອງບັນດາປະເທດລ້າຫຼັງ ທີ່ຈະບັນລຸເຖິງຄວາມກ້າວໜ້າເຊັ່ນດຽວກັນໃນຊຸມປີຕໍ່ໜ້າ.

ການຈັດການກັບຄວາມທ້າທາຍເຫຼົ່ານີ້ ຈະບໍ່ງ່າຍດາຍພໍປານໃດ. ໂດຍສະເພາະ, ຄວາມພະຍາຍາມ ຂອງອາຊຽນ ທີ່ຈະແກ້ໄຂ "ຄວາມທ້າທາຍ ແຫ່ງ ຜົນສຳເລັດ" ນີ້, ໃນທີ່ສຸດອາດຈະເປັນການປະຕິບັດ ສິ່ງທີ່ເປັນໄປບໍ່ໄດ້ ແລະ ໄກ່ເກ່ຍສິ່ງທີ່ບໍ່ສາມາດໄກ່ເກ່ຍໄດ້. ສິ່ງທີ່ຕ້ອງການກໍ່ຄືຄວາມຕັກລິງໃຈທາງການເມືອງ ຢ່າງໃຫຍ່ຫລວງ ຈາກລັດຖະບານ ແລະ ຜູ້ນຳ ຂອງປະເທດສະມາຊິກ ແຕ່ລະປະເທດ. ສິ່ງທີ່ຕ້ອງການຕື່ມອີກ ໄດ້ແກ່ວິໄສທັດ ແລະ ຈິນຕະນາການທີ່ຈະແຈ້ງ ກ່ຽວກັບສິ່ງທີ່ຈະຕ້ອງໄດ້ກະທຳ.

ອີງໃສ່ຂອບເຂດ ແລະ ຄວາມສັບສົນ ຂອງຄວາມທ້າຍທາຍດັ່ງກ່າວ, ໜ້າທີ່ການຄົ້ນຄິດ, ການສະເໜີ ແລະ ການວາງແຜນ ບໍ່ຄວນໃຫ້ເປັນພຽງຄວາມຮັບຜິດຊອບຂອງການນຳ ທາງການເມືອງ ແລະ ອຳນາດຂ້າລັດຖະການເທົ່ານັ້ນ. ມັນຄວນຈະໄດ້ຮັບ ການເຂົ້າຮ່ວມຂອງຊາວອາຊີ ອາຄະເນ ທີ່ກ່ຽວຂ້ອງ ຈາກທຸກໆ ຂົງເຂດຊີວິດນຳອີກ ຊຶ່ງຈະເຕົ້າ

ໂຮມກັນດ້ວຍສະຕິ ແຫ່ງຄວາມຮັບຜິດຊອບຮ່ວມກັນ ແລະ ສາມາດໃຫ້ການປະກອບສ່ວນຕ່າງໆ ອີງຕາມຄວາມຮູ້, ຄວາມຊຳນິຊຳນານ ແລະ ປະສົບການຂອງເຂົາເຈົ້າ.

ເນື່ອງຈາກມີຄວາມຫ່ວງໄຍ ຕໍ່ອານາຄົດ ຂອງອາຊີ ອາຄະເນ ແລະ ບົນຈິດໃຈ ແຫ່ງຄວາມຮັບຜິດຊອບຮ່ວມກັນ ຕໍ່ພາກພື້ນ ໂຄງການນີ້ຈຶ່ງໄດ້ຮັບການລົງມືປະຕິບັດ.

ສືບຕໍ່ບົດລາຍງານ ທີ່ໄດ້ຮັບການແຈກຢາຍ ຢ່າງກວ້າງຂວາງຂອງໜ່ວຍສຶກສາຄົ້ນຄວ້າ ອາຊຽນ-ຫວຽດນາມ ທີ່ໃສ່ຫົວເລື່ອງ "*ຮ່ວມຊາຕາກຳ: ອາຊີ ອາຄະເນ ໃນສັດຕະວັດ ທີ 21,*" ຊຶ່ງໄດ້ຮັບການຮຽບຮຽງສຳເລັດລົງ ແລະ ຈັດພິມ ເມື່ອປີ 1993 ນັ້ນ, ໃນຕົ້ນປີ 1996 ໄດ້ມີຂໍ້ລິເລີ່ມ ເພື່ອສືບຕໍ່ສົ່ງເສີມພາລະກິດ ແຫ່ງການລວມຕົວຂອງພາກພື້ນ ຢູ່ອາຊີ ອາຄະເນ ໂດຍການຮຽກປະຊຸມ ກຸ່ມບຸກຄົນຄະນະນຶ່ງ ຊຶ່ງປະກອບດ້ວຍພົນລະເມືອງ ອາຊີ ອາຄະເນ 25 ຄົນ ເພື່ອສຶກສາຫາຊ່ອງທາງ ແລະ ພາຫະນະຕ່າງໆ ໃຫ້ແກ່ການເສີມສ້າງສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງ ຢູ່ໃນພາກພື້ນ. ກຸ່ມບຸກຄົນພວກນີ້ ຊຶ່ງປະກອບດ້ວຍເພດຊາຍ ແລະ ຍິງ ທີ່ມີປະຫວັດເບື້ອງຫຼັງ ແລະ ປະສົບການ, ແຕກຕ່າງກັນ, ໄດ້ຮັບຜົນສຳເລັດ ແລະ ຄວາມຮູ້ຕ່າງໆ ນາໆ ໄດ້ມາເຕົ້າໂຮມກັນໃນຖານະສ່ວນຕົວ, ບໍ່ແມ່ນໃນຖານະຜູ້ຕາງໜ້າລັດຖະບານ ຫຼື ສະຖາບັນຕ່າງໆ. ກຸ່ມຊາວ ອາຊີ ອາຄະເນ ພວກນີ້ ໄດ້ມີພັນທະອັນໜັກແໜ້ນຕໍ່ອາຊຽນໃນຖານະເປັນ ໂຄງປະກອບ, ກົນໄກ ແລະ ແນວຄວາມຄິດໃຫ້ແກ່ການສົ່ງເສີມ ການລວມຕົວຂອງ ອາຊີ ອາຄະເນ ແລະ ສະໜັບສະໜູນ ຢ່າງເດັດດ່ຽວ ແນວທາງ ແຫ່ງການຂະຫຍາຍການຈັດຕັ້ງ ຊຶ່ງຈະລວມເອົາໝົດທຸກປະເທດ ໃນພາກພື້ນ ພາຍໃນປີ 2000. ໂດຍໃສ່ຊື່ວ່າ "ໜ່ວຍຄົ້ນຄວ້າ ກ່ຽວກັບ ກຳປູເຈຍ ແລະ ລາວ, ຫຼື ເອີ້ນຫຍໍ້ວ່າ

"SGCL", ໜ່ວຍນີ້ ເລັ່ງໃສ່ບັນຫາ ອານາຄົດ ຂອງກຳປູເຈຍ ແລະ ລາວ ໃນຖານະເປັນສະມາຊິກໃໝ່ຂອງ ອາຊຽນ ນັບແຕ່ 1997 ເປັນຕົ້ນໄປ.

ດ້ວຍເຫດຜົນນາໆປະການ ກຳປູເຈຍ ແລະ ລາວ ໄດ້ ຄົງຕົວຢູ່ນອກກະແສທີ່ພຸ່ງພົ້ນ ຂອງບັນດາຂະບວນວິວັດ ແຫ່ງການພັດທະນາ ໃນໂລກ ແລະ ໃນພາກພື້ນ. ໂດຍປາດຖະໜາ ທີ່ຈະເຫັນຂະບວນການຂະຫຍາຍຕົວ ຂອງອາຊຽນ ຜັນແປໄປໃນລັກສະນະ ທີ່ເປັນປະໂຫຍດແກ່ປະເທດ ແລະ ປະຊາຊົນທັງໝົດ ໃນພາກພື້ນ, SGCL ເລັ່ງໃສ່ຊອກຫາ ແລະ ສະເໜີແນະຊ່ອງທາງ ແລະ ພາຫະນະຕ່າງໆ ໃຫ້ແກ່ການເສີມສ້າງຄວາມອາດສາມາດ ຂອງສອງປະເທດ ໂດຍຜ່ານການຮ່ວມມືກັບບັນດາສະມາຊິກ ອາຊຽນ ໃນປະຈຸບັນ ແລະ ໃຫ້ແກ່ການກະກຽມສອງປະເທດນີ້ ເຂົ້າຮ່ວມຢ່າງຕັ້ງໜ້າ ແລະ ເຕັມເມັດເຕັມໜ່ວຍ ໃນກິດຈະກຳຕ່າງໆຂອງອາຊຽນ. ໃນກອງປະຊຸມຫລາຍຄັ້ງທີ່ຜ່ານມາຂອງຕົນ, ສະມາຊິກ SGCL ທັງຫລາຍ ໄດ້ໃຊ້ຄວາມພະຍາຍາມ, ໃນຂັ້ນທຳອິດ, ເພື່ອກຳນົດ ບັນຫາ ແລະ ຄວາມທ້າທາຍຕ່າງໆ ຊຶ່ງຈະເປັນອຸປະສັກຕໍ່ການສົ່ງເສີມ ການຮ່ວມມືໃນພາກພື້ນ ເວົ້າລວມ ແລະ ຕໍ່ການເຂົ້າເປັນຄູ່ຮ່ວມມື ໃນອາຊຽນ ຢ່າງສົມບູນ ຂອງກຳປູເຈຍ ແລະ ລາວ ເວົ້າສະເພາະ, ແລະ ໃນຂັ້ນ ທີ່ສອງ, ເພື່ອສຶກສາທາງອອກດ້ານນະໂຍບາຍ ສຳລັບການຄຸ້ມຄອງ, ບັນເທົາ ຫລື ແກ້ໄຂ ບັນຫາ ແລະ ຄວາມທ້າທາຍເຫຼົ່ານີ້ ໃນໄລຍະສັ້ນ ແລະ ໄລຍະຍາວ.

ໜ່ວຍສຶກສາຄົ້ນຄວ້າ ກ່ຽວກັບ ກຳປູເຈຍ ແລະ ລາວ ໄດ້ປະຕິບັດງານ ບົນພື້ນຖານ ແຫ່ງການສັນນິຖານ ຈຳນວນນຶ່ງ ຊຶ່ງສົມຄວນໄດ້ຈັດເຂົ້າກັນ ເປັນບົດຄວາມອັນຈະແຈ້ງຄືດັ່ງລຸ່ມນີ້ :

ອັນທຳອິດ ແມ່ນວ່າ ຂໍ້ສະເໜີແນະທັງໝົດ ກ່ຽວກັບຊ່ອງທາງ ແລະ ພາຫະນະ ແຫ່ງການເສີມສ້າງຄວາມອາດສາມາດ ຂອງກຳປູເຈຍ ແລະ ລາວ ໂດຍຜ່ານການຮ່ວມມື ກັບອາຊຽນ ແລະ ການກະກຽມຂອງ

ສອງປະເທດນີ້ ເພື່ອເຂົ້າຮ່ວມຢ່າງເຕັມສ່ວນ ຢູ່ໃນສະມາຄົມ, ໃນເມື່ອໄດ້ຮັບການຮ່າງຂຶ້ນ ດ້ວຍພະລັງແຫ່ງຄວາມຮອບຄອບ ແລະ ຄວາມເປັນເອກະສັນກັນ ຂອງຄະນະຄົ້ນຄວ້າ, ກ່ອນອື່ນໝົດ ຄວນຈະສ່ອງແສງເຖິງ ວິໄສທັດ ແລະ ຄວາມມຸ່ງມາດປາດຖະໜາ, ຄວາມຫ່ວງໄຍ ແລະ ບູລິມະສິດຕ່າງໆ ຂອງສອງປະເທດ, ຍ້ອນວ່າ ນີ້ຄືວິທີທາງ ທີ່ເໝາະສົມທີ່ສຸດ, ບາງທີກໍ່ອາດເປັນວິທີດຽວກໍ່ໄດ້ ເພື່ອຄ້ຳປະກັນ ໃຫ້ສອງປະເທດ ສາມາດປະກອບສ່ວນຢ່າງເຕັມທີ ເຂົ້າໃນຂະບວນວິວັດແຫ່ງການຂະຫຍາຍຕົວສູ່ທາງກວ້າງ ແລະ ທາງເລິກ ຂອງການຮ່ວມມືໃນພາກພື້ນ ແລະ ສາມາດໄດ້ຮັບຜົນປະໂຫຍດຢ່າງເຕັມສ່ວນ ຈາກຂະບວນວິວັດດັ່ງກ່າວ.

ອັນທີ່ສອງ ຄືດັ່ງກໍລະນີຂອງ ຫວຽດນາມ, ກຳປູເຈຍ ແລະ ລາວ ມີຄວາມສາມາດ ປະກອບສ່ວນຢ່າງສຳຄັນ ເຂົ້າໃນພາລະກິດ ແຫ່ງການລວມຕົວຂອງພາກພື້ນ, ເຖິງວ່າ ໃນປະຈຸບັນ ສອງປະເທດຍັງມີຂໍ້ຈຳກັດຫລາຍປະການ ແລະ ມີລະດັບການພັດທະນາເສດຖະກິດຕ່ຳ, ແລະ ເຖິງວ່າ, ຕ່າງກໍ່ໄດ້ຜ່ານໄລຍະເວລາທີ່ຫຍຸ້ງຍາກ ຫລາຍຄັ້ງ ຫລາຍທີ່ນມາແລ້ວ, ຊີວິດຂອງພາກພື້ນ ທັງໃນໄລຍະສັ້ນ ແລະ ໄລຍະຍາວ ຈະໄດ້ຮັບການເພີ່ມພູນຄູນສ້າງ ໂດຍການເຂົ້າຮ່ວມ ຢ່າງເຕັມສ່ວນຂອງເຂົາເຈົ້າ ຢູ່ໃນນັ້ນ.

ການສັນນິຖານ ອັນທີ່ສາມ ຄືດັ່ງກໍລະນີຂອງ ຫວຽດນາມ ແມ່ນວ່າ, ທິດທາງ ແລະ ຈັງຫວະຂອງການພັດທະນາດ້ານການເມືອງ, ສັງຄົມ ແລະ ເສດຖະກິດໃນອານາຄົດ ຂອງກຳປູເຈຍ ແລະ ລາວ ມີຄວາມສອດຄ່ອງເປັນຢ່າງຍິ່ງ ກັບພາລະກິດ ແຫ່ງການລວມຕົວກັນ ຂອງພາກພື້ນ ແລະ ກັບຄວາມພະຍາຍາມ ເພື່ອກຳຈັດຄວາມທ້າທາຍຕ່າງໆ ຊຶ່ງຍັງຄົງເປັນອຸປະສັກໃຫ້ແກ່ພາກພື້ນ. ໃນຂະນະ ທີ່ ຫຼັກການບໍ່ແຊກແຊງ ຂອງອາຊຽນ ຄວນໄດ້ຮັບການເຊີດຊູ, ບັນດາສະມາຊິກອາຊຽນ ປະຈຸບັນກໍ່ບໍ່

ຄວນຢູ່ເປັນຝ່າຍເມີນເສີຍ ແຕ່ຄວນພິຈາລະນາເຖິງຄວາມອາດສາມາດ ຫຼືນບົດບາດອັນ "ທ້າວທັນຂອງພວກຕົນ" ຢູ່ໃນຂະບວນວິວັດ ແຫ່ງການພັດທະນາ ຂອງສອງປະເທດດັ່ງກ່າວ.

ທິວເລື່ອງ ຂອງການສັນນິຖານເຫຼົ່ານີ້ ສາມາດເອີ້ນໄດ້ວ່າ: "ທິດທາງແຫ່ງການເປັນຄູ່ຮ່ວມມື" (Dictate of Partnership). ໜ່ວຍຄົ້ນຄວ້າ ກ່ຽວກັບກຳປູເຈຍ ແລະ ລາວ (SGCL) ເຂົ້າໃຈວ່າ ການລວມຕົວກັນຂອງພາກພື້ນ ໝາຍເຖິງການເປັນຄູ່ຮ່ວມມື ແລະ ການເປັນຄູ່ຮ່ວມມືຮຽກຮ້ອງ, ກ່ອນອື່ນໝົດ, ໃຫ້ມີ *ສະຕິຕໍ່ຄວາມຮັບຜິດຊອບຮ່ວມກັນ* ລະຫວ່າງບັນດາສະມາຊິກ ຂອງກຸ່ມ, ສະຕິກ່ຽວກັບພັນທະຂອງຜູ້ທີ່ເຂັ້ມແຂງ ທີ່ຈະຕ້ອງມີໜ້າທີ່ຊ່ວຍເຫຼືອຜູ້ທີ່ ບໍ່ທັນເຂັ້ມແຂງເທົ່າຕົນ ຊຶ່ງມີຄວາມປະສົງຮັບເອົາການຊ່ວຍເຫຼືອ ແບບສ້າງສັນ. ອັນທີ່ສອງ, ມັນຮຽກຮ້ອງໃຫ້ມີການເສີມສ້າງ ຄວາມສາມາດໃຜລາວ ຂອງໝົດທຸກປະເທດສະມາຊິກ ເພື່ອປະກອບສ່ວນເຂົ້າໃນພາລະກິດລວມ, ໂດຍບໍ່ຈຳແນກຄວາມເຂັ້ມແຂງ ແລະ ອ່ອນແອ, ຄວາມໄດ້ປຽບ ແລະ ເສຍປຽບຂອງເຂົາເຈົ້າ.

ບົດລາຍງານນີ້ ແບ່ງອອກເປັນ 3 ພາກທີ່ຕິດພັນກັນ. ພາກທີ່ນຶ່ງ ປະກອບມີວິໄສທັດ ຂອງ "ໜ່ວຍຄົ້ນຄວ້າ ກ່ຽວກັບ ກຳປູເຈຍ ແລະ ລາວ" ຕໍ່ ອາຊີ ອາຄະເນ; ອັນນີ້ ແມ່ນເພື່ອ ອະທິບາຍອອກເຖິງແນວຄວາມຄິດ ແລະ ທັດສະນະຕ່າງໆ ຂອງໜ່ວຍຄົ້ນຄວ້າ ບໍ່ສະເພາະແຕ່ກ່ຽວກັບ ອານາຄົດຂອງພາກພື້ນ ແລະ ທິດທາງລວມ ຊຶ່ງພາກພື້ນຄວນພັດທະນາໄປຕາມ, ແຕ່ຍັງກ່ຽວກັບ "ທີ່ຕັ້ງ" ຂອງກຳປູເຈຍ ແລະ ລາວ ຢູ່ໃນອາຊີ ອາຄະເນ ໃນອານາຄົດ. ພາກທີ່ສອງ ຊີ້ໃຫ້ເຫັນເຖິງບັນຫາ ແລະ ຄວາມທ້າທາຍຕ່າງໆ ຊຶ່ງເປັນ ຫຼື ອາດຈະເປັນ ອຸປະສັກ ຕໍ່ການເຮັດໃຫ້ ວິໄສທັດນີ້ ປະກົດເປັນຈິງ, ໂດຍສະເພາະແມ່ນ ກ່ຽວກັບການເຂົ້າເປັນຄູ່ຮ່ວມມືຢ່າງສົມບູນຂອງ ກຳປູເຈຍ ແລະ ລາວ ໃນພາກພື້ນ.

ພາກທີ່ສາມ ໄດ້ວາງນະໂຍບາຍ ກ່ຽວກັບທາງເລືອກຕ່າງໆ ສຳລັບການຄຸ້ມຄອງ, ການບັນເທົາ ຫຼື ການແກ້ໄຂບັນຫາ ແລະ ຄວາມທ້າທາຍເຫຼົ່ານີ້ ໃນສະເພາະໜ້າ ໄລຍະປານກາງ ແລະ ໄລຍະຍາວນານ.

24 / VII
ຫ້າມຈຳໜ່າຍ

## ພາກທີ ນຶ່ງ

# ວິໄສທັດ ກ່ຽວກັບ ອາຊີ ອາຄະເນ

ທັງອຸດົມການຂອງບັນດາຜູ້ກໍ່ຕັ້ງ ອາຊຽນ ດັ່ງໄດ້ສະແດງອອກຢູ່ໃນຖະແຫຼງການ ບາງກອກ ປີ 1967 ແລະ ທັງສະພາບຄວາມເປັນຈິງແຫ່ງການປ່ຽນແປງທາງດ້ານພູມສາດ-ການເມືອງ, ສັງຄົມ ເສດຖະກິດ ແລະ ເຕັກໂນໂລຊີ ຢູ່ໃນໂລກ ຮຽກຮ້ອງໃຫ້ ອາຊຽນ ສູ້ຊົນ ເພື່ອກາຍເປັນສະມາຄົມທົ່ວພາກພື້ນ ຢ່າງແທ້ຈິງ ແລະ ໃຫ້ການພົວພັນ ລະຫວ່າງບັນດາສະມາຊິກທັງຫລາຍ ຂອງສະມາຄົມ ໄດ້ຮັບການຍົກຂຶ້ນ ສູ່ການຮ່ວມມື ໃນລະດັບສູງຍິ່ງໆຂຶ້ນ.

*ໃນສັດຕະວັດທີ 21 ອາຊຽນ ຄວນກາຍເປັນ ວົງຄະນະຍາດນຶ່ງ ຊຶ່ງຈະເປັນກຳລັງ ອັນສຳຄັນ ທາງດ້ານການເມືອງ, ການທູດ, ສັງຄົມ, ເສດຖະກິດ, ວັດທະນາທຳ ແລະ ສິນລະທຳ ກຳລັງນຶ່ງ ໃນເວທີຂອງໂລກ.*

*ວົງຄະນະຍາດນີ້ ຄວນຈະເປັນ ວົງຄະນະຍາດ ທີ່ມີຫລາຍຮູບຫລາຍສີ ແຕກຕ່າງກັນ ຂອງບັນດາລັດ ທີ່ມີຄວາມສະເໝີພາບ ແລະ ອະທິປະໄຕ, ຊຶ່ງສ່ອງແສງເຖິງ ຄວາມເປັນເອກະພາບ ຢູ່ໃນຄວາມຫລາກຫລາຍ ໂດຍໄດ້ຮັບການຜູກພັນເຂົ້າກັນ ດ້ວຍສາມັນສຳນຶກ ແຫ່ງຊາຕາກຳ ແລະ ກຽດຕິສັກ ແລະ ມີຄວາມພໍໃຈຕໍ່ ສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນ; ເປັນວົງຄະນະຍາດ ຊຶ່ງມີການຂະຫຍາຍຕົວຢ່າງວ່ອງໄວດ້ານເສດຖະກິດ ແລະ ຍືນຍົງທາງດ້ານນິເວດວິທະຍາ ແລະ ຊຶ່ງຄວາມບໍ່ສະເໝີພາບດ້ານຊັບສິນບັດ ແລະ ລາຍໄດ້, ທັງຢູ່ພາຍໃນ ແລະ ລະຫວ່າງຊາດ, ຖືກລົດລົງຢູ່ໃນລະດັບ*

*ຕໍ່າສຸດ; ເປັນວົງຄະນະຍາດ ທີ່ເອື້ອອາລີ ຊຶ່ງມີຄວາມຮັບຜິດຊອບຮ່ວມກັນ ໃນການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເພື່ອຕອບສະໜອງຄວາມຕ້ອງການ ພື້ນຖານຂອງມະນຸດ ໃນດ້ານສະບຽງອາຫານ, ບ່ອນຢູ່ອາໄສ, ເຄື່ອງນຸ່ງຫົ່ມ, ການຮັກສາສຸກຂະພາບ ແລະ ການສຶກສາ; ເປັນວົງຄະນະຍາດ ຊຶ່ງຄ່ານິຍົມທາງດ້ານຈິດໃຈ ແລະ ຄຸນນະພາບແຫ່ງຊີບພະຍາກອນມະນຸດ ຂອງຕົນ ໄດ້ຮັບການເຊີດຊູ ສູ່ລະດັບສູງສຸດ ເທົ່າທີ່ຈະສູງໄດ້; ເປັນວົງຄະນະຍາດ ທີ່ປະກອບດ້ວຍ ທັງມໍລະດົກດ້ານວັດທະນະທໍາ ອັນອຸດົມຮັ່ງມີ ແລະ ຄວາມສາມາດດ້ານເຕັກໂນໂລຊີ ອັນເຂັ້ມແຂງ ພ້ອມດ້ວຍຄວາມພູມໃຈ ໃນອາດີດ ແລະ ຄວາມເຊື່ອໝັ້ນໃນອານາຄົດຂອງຕົນ.*

ວົງຄະນະຍາດນີ້ ຄວນຈະເປີດການຮ່ວມມື ກັບວົງຄະນະຍາດອື່ນໆ ໃນທຸກດ້ານ ບົນພື້ນຖານແຫ່ງການແບ່ງຜົນປະໂຫຍດ ຊຶ່ງກັນ ແລະ ກັນ. ພ້ອມກັນນັ້ນ, ມັນຕ້ອງຢຶດໝັ້ນໃນພັນທະຂອງຕົນຕໍ່ບາງຫຼັກການ ແລະ ຂໍ້ກໍານົດຂອງສາກົນ, ເປັນຕົ້ນກ່ຽວກັບການສົ່ງເສີມໃຫ້ມີການຄ້າເສລີ, ຄ່ານິຍົມຂອງມະນຸດ, ແລະ ການປາບອາຊະຍາກໍາ, ການກໍ່ການຮ້າຍ, ແລະ ການຄ້າຢາເສບຕິດ ແລະ ການຕໍ່ຕ້ານການເຊື່ອມໂຊມຂອງສະພາບແວດລ້ອມ.

*ຢູ່ໃນວົງຄະນະຍາດນີ້ ສະມາຊິກທັງໝົດ ຈະຕ້ອງໄດ້ເຂົ້າຮ່ວມ, ປະກອບສ່ວນ ແລະ ຮັບຜົນປະໂຫຍດຈາກກິດຈະກໍາລວມ ແລະ ກໍາວິທີຊຶ່ງກັນ ແລະ ກັນ ທັງໝົດ ຢ່າງເຕັມສ່ວນ ເທົ່າທີ່ຈະເປັນໄປໄດ້.* ດ້ວຍເຫດຜົນແຫ່ງຄວາມແຕກຕ່າງກັນ ຄວາມອ່ອນແອ ຫຼື ຄວາມຮູ້ສຶກແຫ່ງການຂາດແຄນ ແລະ ການເຫີນຫ່າງຂອງສະມາຊິກໃດນຶ່ງ ຈະທໍາລາຍກໍາລັງແຮງລວມ ແລະ ຄວາມເຂັ້ມແຂງ ຂອງທົ່ວພາກພື້ນ.

ເພື່ອເອົາໂຕລອດ ແລະ ປະສົບຄວາມຈະເລີນກ້າວໜ້າ ຢູ່ໃນໂລກ ຊຶ່ງການແຂ່ງຂັນຍາດໂອກາດສຳລັບການຄ້າ ແລະ ການລົງທຶນຄາດວ່າ ຈະເພີ່ມທະວີຄວາມຮຸນແຮງຂຶ້ນເລື້ອຍໆ ແລະ ຊຶ່ງຜົນສຳເລັດທາງດ້ານເສດຖະກິດ ຈະເປັນ ຫລື ຖືກມອງເຫັນ ວ່າເປັນບໍ່ເກີດ ທີ່ສຳຄັນຍິ່ງ ແຫ່ງຄວາມຊອບທຳຢູ່ພາຍໃນປະເທດ ແລະ ຄວາມມີອິດທິພົນທາງສາກົນ, ອາຊີ ອາຄະເນ ຈະຕ້ອງສືບຕໍ່ເປັນພາກພື້ນ ແຫ່ງການຂະຫຍາຍຕົວສູງດ້ານເສດຖະກິດ ແລະ ຕ້ອງສູ້ຊົນເພື່ອໃຫ້ເປັນໃຈກາງ ການເຄື່ອນໄຫວດ້ານເສດຖະກິດ ທີ່ຂະຫຍັນຍິ່ງໆຂຶ້ນ. ພ້ອມກັນນັ້ນ, ຜົນສຳເລັດອັນຕໍ່ເນື່ອງຮຽກຮ້ອງໃຫ້ ບັນດາປະເທດ ອາຊຽນ ແຕ່ລະປະເທດ ກໍຄືລວມກັນເສີມສ້າງ ຄວາມສາມາດດ້ານເຕັກໂນໂລຊີ ຂອງຕົນ ເພື່ອຝຶກຝົນ ແລະ ຊ່ວຍເຮັດໃຫ້ຄວາມສາມາດຂອງການແຂ່ງຂັນຂອງພວກຕົນເປັນຫອກປາຍແຫຼມ ແນເຂົ້າສູ່ສັດຕະວັດໜ້າ.

*ເຖິງຢ່າງໃດກໍ່ຕາມ, ຜົນສຳເລັດ ແຫ່ງການຂະຫຍາຍຕົວ ບໍ່ຄວນເປັນຈຸດ ອາວະສານ ຢູ່ໃນຕົວເອງ.*

ໂດຍຄຳນຶງເຖິງ ການເຊື່ອມໂຊມຢ່າງໄວວາ ຂອງສະພາບແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ໃນພາກພື້ນ, ຂະບວນການພັດທະນາ ຈະຕ້ອງຮັກສາໄວ້ຊຶ່ງຄວາມຍືນຍົງ ທາງດ້ານນິເວດວິທະຍາ ແລະ ອັນສຳຄັນແມ່ນຄວນເອົາໃຈໃສ່ຕໍ່ວຽກງານປົກປັກຮັກສາ ສິ່ງທີ່ຍັງເຫຼືອຢູ່ ຊຶ່ງເປັນມໍລະດົກທຳມະຊາດ ທີ່ອຸດົມຮັ່ງມີຂອງພາກພື້ນ.

*ຍິ່ງກວ່ານັ້ນ, ຈະຕ້ອງສະແດງໃຫ້ຄົນທັງຫລາຍເຫັນວ່າ ຜົນປະໂຫຍດ ທີ່ໄດ້ຮັບຈາກການຂະຫຍາຍຕົວ ໄດ້ຖືກແບ່ງປັນຢ່າງຍຸດຕິທຳໃນສັງຄົມ.*

ຄວາມບໍ່ຍຸດຕິທຳ ສາມາດກໍ່ໃຫ້ເກີດ ຄວາມແຕກແຍກ ໃນທຸກລະດັບແຫ່ງກິດຈະການຂອງມະນຸດ. ອາຊຽນ ຄວນເປັນ ວົງຄະນາຍາດນຶ່ງ ຊຶ່ງຄວາມແຕກຕ່າງກັນດ້ານຊັບສົມບັດ, ລາຍໄດ້ ແລະ ໂອກາດເພື່ອ

ຄວາມກ້າວໜ້າ, ທັງຢູ່ພາຍໃນ ແລະ ລະຫວ່າງບັນດາປະເທດສະມາຊິກດ້ວຍກັນ ຢູ່ໃນລະດັບທີ່ ຕ່ຳສຸດ. ຄວາມທຸກຍາກ ແລະ ຄວາມອັບຈົນອື່ນໆ ຂອງຊີວິດ ຈະບໍ່ສາມາດຖືກລົບລ້າງ ໄດ້ຢ່າງງ່າຍດາຍ, ແຕ່ວ່າ ຢູ່ອາຊີ ອາຄະເນ ແຫ່ງ ອານາຄົດ ມູນເຊື້ອຂອງຄວາມເປັນຍາດພີ່ນ້ອງ ແລະ ຄວາມເອື້ອເຟື້ອເພື່ອແຜ່ຕໍ່ກັນ ຕ້ອງໄດ້ຮັບການຟື້ນຟູຄືນ ແລະເຊີດຊູໃຫ້ຍືນຍົງຕໍ່ໄປ.

ສະຕິແຫ່ງຄວາມຮັບຜິດຊອບຮ່ວມກັນອັນນີ້ ແມ່ນຄຸນສົມບັດຢ່າງນຶ່ງທີ່ນັ້ນ ຂອງວິງຄະນະຍາດ ອາຊຽນ ທີ່ຍົກເອົາຄຸນຄ່າຂອງຄົນ ແລະ ຄຸນນະພາບ ຂອງຊັບພະຍາກອນມະນຸດ ຂຶ້ນສູ່ລະດັບສູງເທົ່າທີ່ຈະສູງໄດ້.

*ຖ້າຈະເວົ້າອີກແບບນຶ່ງກໍຄື ຄວນເລັ່ງຈຸດສຸມໃສ່ຄວາມສຳຄັນຂອງມະນຸດ.*

ຍ້ອນວ່າ ກ່ອນອື່ນໝົດ ວົງຄະນະຍາດທັງຫລາຍ ໃນທີ່ສຸດກໍແມ່ນຄົນນັ້ນເອງ. ສາຍສຳພັນ ທີ່ຜູກມັດ ຢ່າງແທ້ຈິງ ບໍ່ແມ່ນບັນດາສະຖາບັນ ແລະ ສຳນັກງານ ຕົວແທນ ທີ່ບໍ່ມີໜ້າຕາ, ບັນດາສັນຍາ ແລະລະບຽບການ ທີ່ບໍ່ມີຕົວຕົນ, ແຕ່ຫາກແມ່ນພັນທະ, ສະຕິແຫ່ງຄວາມເອື້ອເຟື້ອ ເພື່ອແຜ່, ສະຕິ ແຫ່ງການເຂົ້າຮ່ວມ ແລະ ເປັນເຈົ້າຂອງ, ສະຕິແຫ່ງການເປັນສັນສ່ວນ ແລະ ຄວາມຕິດພັນກັນ ຊຶ່ງສາມາດໄດ້ຮັບການຖະນຸຖະໜອມພຽງແຕ່ຢູ່ໃນຈິດໃຈ ຂອງມະນຸດທີ່ແທ້ຈິງ ທີ່ຍັງມີຊີວິດຢູ່ເທົ່ານັ້ນ.

ແລະ ເຫດຜົນອັນທີ່ສອງ, ໂດຍມີປະຊາກອນລະຫວ່າງ 460 ລ້ານຄົນ ຢູ່ໃນພາກພື້ນ ຊຶ່ງສ່ວນຫລາຍ ແມ່ນຢູ່ໃນກຸ່ມອາຍຸ ໄວໜຸ່ມ, ຊັບພະຍາກອນມະນຸດ ບາງທີເປັນຊັບສົມບັດ ທີ່ຍິ່ງໃຫຍ່ທີ່ສຸດ ຂອງອາຊີ ອາຄະເນ. ເຫດຜົນ ແຫ່ງການແຂ່ງຂັນ ຢູ່ໃນໂລກ, ຈັງຫວະແຫ່ງການປ່ຽນແປງທາງດ້ານເຕັກໂນໂລຊີ ແລະ ຄວາມຈຳເປັນສອງຢ່າງ ທີ່ຄວບຄູ່ກັນ

ແຫ່ງການຂະຫຍາຍຕົວດ້ານເສດຖະກິດ ແລະ ການແຈກຢາຍ ຮຽກຮ້ອງໃຫ້ມີການເພີ້ມພູນຄູນສ້າງຊັບສິນບັດເຫຼົ່ານີ້ ທາງດ້ານຄຸນຄ່າ ຢ່າງເຕັມສ່ວນ ເທົ່າທີ່ຈະເປັນໄປໄດ້.

*ໃນຂະນະທີ່ ເຮົາມອງສາຍຕາສູ່ ອານາຄົດ ດ້ວຍຄວາມເຊື່ອໝັ້ນ, ວິງຄະນະຍາດນີ້ ກໍ່ຄວນພະຍາຍາມ ປົກປັກຮັກສາ ແລະ ຟື້ນຟູຄ່ານິຍົມທາງດ້ານປະເພນີ ແລະ ມໍລະດົກທາງດ້ານວັດທະນະທຳ ອັນຮັ່ງມີ ຂອງອາຊີ ອາຄະເນ.* ເຫດຜົນກໍ່ຄືວ່າຄວາມທະນົງໃຈທີ່ບໍ່ກະຕືລືລົ້ນເກີນໄປຕໍ່ອາດີດຂອງຕົນ ຂອງຄົນຜູ້ນຶ່ງມັກຈະຊ່ວຍ ຊຸບຫຼອມສະຕິ ຕໍ່ຕົນເອງ ແລະ ຕໍ່ເປົ້າໝາຍລວມ ທີ່ຈຳເປັນ ສຳລັບການດຳເນີນຄວາມພະຍາຍາມຮ່ວມກັນ, ຈະຊ່ວຍໃຫ້ມີສະຕິ ຕໍ່ການແບ່ງສັນປັນສ່ວນ ເມື່ອມີການຕັດສິນບັນຫາທີ່ສັບສົນ ຫຍຸ້ງຍາກ ແລະ ຈະໃຫ້ພະລັງ ແກ່ພັນທະຂອງຕົນ ໃນເວລາເກີດຄວາມລະແວງສົງໄສ ແລະ ຄວາມບໍ່ແນ່ນອນ.

## ພາກທີສອງ

## ບັນຫາ ແລະ ຄວາມທ້າທາຍຕ່າງໆ

ມີບັນຫາ ແລະ ຄວາມທ້າທາຍ ຈຳນວນນຶ່ງ ຊຶ່ງເປັນ ຫຼື ອາດ ຍັງຢືນ ໄດ້ວ່າເປັນອຸປະສັກ ຕໍ່ການເຮັດໃຫ້ວິໄສທັດດັ່ງກ່າວ, ກາຍເປັນ ຄວາມຈິງໃນສ່ວນຂອງການຮ່ວມມືໃນພາກພື້ນຂອງ ອາຊຽນ ເວົ້າລວມ ແລະ ໃນສ່ວນຂອງການເຂົ້າເປັນພາຄີສົມບູນ ຂອງກຳປູເຈຍ ແລະ ລາວ ໃນການຮ່ວມມື ຢູ່ໃນພາກພື້ນ ເວົ້າສະເພາະ.

ດັ່ງໄດ້ກ່າວມາກ່ອນແລ້ວ, ບັນຫາ ແລະ ຄວາມທ້າທາຍເຫຼົ່ານີ້ ມີຢູ່ຫລາຍລະດັບ. ໃນລະດັບສາກົນ, ການປ່ຽນແປງ ສາຍພົວພັນ ລະຫວ່າງ ບັນດາປະເທດມະຫາອຳນາດ ດ້ວຍກັນ ສາມາດກໍ່ໃຫ້ເກີດຄວາມ ບໍ່ແນ່ນອນ ໃນລະດັບທີ່ແຕກຕ່າງກັນ, ໂດຍສະເພາະ ແມ່ນກ່ຽວກັບ ການຊັ່ງຊາກຳລັງ ແລະ ການມີໜ້າ ລະຫວ່າງ ບັນດາມະຫາອຳນາດດັ່ງ ກ່າວ ຢູ່ໃນພາກພື້ນ ອາຊີ-ປາຊີຟິກ. ທ່າອ່ຽງຂອງລະບົບເສດຖະກິດໂລກ ໃນປະຈຸບັນ ກໍ່ສາມາດເຮັດໃຫ້ເກີດຄວາມບໍ່ແນ່ນອນ ໄດ້ເຊັ່ນດຽວກັນ ຊຶ່ງອາດນຳໄປສູ່ການເພີ່ມທະວີຄວາມຂັດແຍ່ງ ແລະ ຄວາມເຄັ່ງຕຶງໃນ ດ້ານການຄ້າ ແລະ ສິ່ງທີ່ກ່ຽວພັນກັບການຄ້າ.

ໃນລະດັບພາກພື້ນ, ແຫຼ່ງກຳເນີດແຫ່ງຄວາມຂັດແຍ່ງ ໃໝ່ຫຼາຍ ແຫ່ງ ພວມພຸ່ງພົ້ນຂຶ້ນ ແລະ ບັນຫາສອງຝ່າຍຕ່າງໆ ຄາດວ່າຈະສືບຕໍ່ ມີ ຜົນກະທົບອັນສຳຄັນ ຕໍ່ຈັງຫວະ ແລະ ທິດທາງ ຂອງການຮ່ວມມືໃນ ພາກພື້ນ. ຍິ່ງກວ່ານັ້ນ, ໃນເມື່ອອາຊຽນ ສູ້ຊົນ ເພື່ອໃຫ້ກາຍເປັນສະມາຄົມພາກພື້ນ ຢ່າງແທ້ຈິງ, ຂໍ້ຈຳກັດ ແລະ ຂໍ້ຂາດຕົກບົກພ່ອງຂອງມັນ ດ້ານການຈັດຕັ້ງ ຄາດວ່າຈະປາກົດອອກ ຢ່າງເດັ່ນຊັດກວ່າເກົ່າ ຊຶ່ງຈຳ

ເປັນຕ້ອງໄດ້ມີການປະເມີນໂຄງປະກອບ ແລະ ລະບົບຕ່າງໆ ຂອງການຈັດຕັ້ງ ຄືນໃໝ່ທາງດ້ານພື້ນຖານ.

ແຕ່ວ່າ, ກ່ຽວກັບ ກຳປູເຈຍ ແລະ ລາວ, ອຸປະສັກທີ່ສຳຄັນຕົ້ນຕໍໃນໄລຍະໃກ້ ແລະ ປານກາງ ແມ່ນລະດັບການພັດທະນາ ດ້ານສັງຄົມ, ເສດຖະກິດ, ຊັບພະຍາກອນມະນຸດ ແລະ ໂຄງລ່າງ ຂອງສອງປະເທດທີ່ຍັງຕ່ຳ ພ້ອມດ້ວຍຂໍ້ຈຳກັດຈຳນວນນຶ່ງ ດ້ານການຈັດຕັ້ງ ແລະ ກົດໝາຍ. ສິ່ງເຫຼົ່ານີ້ ຈຳກັດ ຢ່າງຮ້າຍແຮງ ທັງຄວາມສາມາດ ໃນການລຶດຜ່ອນຄວາມຍາກຈົນ, ຍັງການບັນລຸ ອັດຕາການຂະຫຍາຍຕົວດ້ານເສດຖະກິດ ແບບຕໍ່ເນື່ອງ ໃຫ້ສູງຂຶ້ນກວ່າເກົ່າ ໂດຍຍຸດຕິທຳ ແລະ ຈຳກັດຄວາມສາມາດຂອງເຂົາເຈົ້າ ເພື່ອປະກອບສ່ວນເຂົ້າໃນຂະບວນການຮ່ວມມືຂອງພາກພື້ນ ແລະ ເພື່ອຮັບເອົາຜົນປະໂຫຍດ ຈາກຂະບວນການຮ່ວມມືດັ່ງກ່າວ.

ສຳລັບກຳປູເຈຍ, ຜົນສະທ້ອນທີ່ສົງຄາມໄດ້ປະໄວ້ ທາງດ້ານການເມືອງ, ເສດຖະກິດ, ສັງຄົມ ແລະ ບຸກຄົນ ສືບຕໍ່ກີດຂວາງຂະບວນການສ້າງຄວາມປອງດອງຊາດ ແລະ ການສ້າງສາປະເທດຊາດຄືນໃໝ່ໃນຂະນະດຽວກັນ ສຳລັບລາວ, ພາລະແບກຫາບຈາກຄວາມເສຍປຽບທາງດ້ານພູມສາດ ຄາດວ່າ ຈະເປັນອຸປະສັກ ອັນໜັກໜ່ວງ ກີດຂວາງຄວາມພະຍາຍາມ ໃນການຜັນຂະຫຍາຍ ຄວາມມຸ່ງມາດປາດຖະໜາຂອງຊາດຕົນ ໃຫ້ປະກົດເປັນຈິງ.

ນອກຈາກບັນຫາທີ່ເປັນຮູບປະທຳເຫຼົ່ານີ້ແລ້ວ, ກໍ່ຍັງມີສິ່ງ ທີ່ສາມາດເອີ້ນໄດ້ວ່າ *"ສິ່ງທ້າທາຍຕໍ່ຄວາມມຸ່ງຫວັງ"*

ທັງກຳປູເຈຍ ແລະ ລາວ ເຫັນວ່າ ຄວາມສົມບູນພູນສຸກໃນອານາຄົດຂອງພວກຕົນ ແລະ ຂອງອາຊຽນ ຈະເປັນການເສີມສ້າງ ຊຶ່ງກັນແລະ ກັນ. ເຂົາເຈົ້າ ຫວັງວ່າ ການເຂົ້າ ເປັນສະມາຊິກຂອງອາຊຽນ ຈະນຳມາຊຶ່ງກາລະໂອກາດ ເພີ່ມຂຶ້ນຕື່ມໃຫ້ແກ່ການຮ່ວມມື, ອັນຈະເປັນ

ການປະກອບສ່ວນ ບໍ່ພຽງແຕ່ເຂົ້າໃນການພັດທະນາເສດຖະກິດ ຂອງພວກຕົນເທົ່ານັ້ນ, ແຕ່ຫາກຍັງ ເຂົ້າໃນການກ້າວເດີນ ແລະ ການສ້າງຄວາມເຂັ້ມແຂງ ຂອງພາກພື້ນ ອີກດ້ວຍ.

ກຳປູເຈຍ ແລະ ລາວ ຊຶ່ງຈະເປັນຄູ່ຮ່ວມມື ໃນອານາຄົດ ຂອງອາຊຽນ ເຫັນວ່າ ອາຊຽນ ໄດ້ສ້າງ ແລະ ສືບຕໍ່ສ້າງເງື່ອນໄຂ ເພື່ອສັນຕິພາບ ແລະ ສະຖຽນລະພາບ ຢູ່ໃນພາກພື້ນ ຊຶ່ງເຂົາເຈົ້າຮັບຮູ້ວ່າ ເປັນເງື່ອນໄຂທີ່ສຳຄັນອັນຈຳເປັນ ສຳລັບການພັດທະນາ ເສດຖະກິດ. ພ້ອມກັນນັ້ນ, ເຂົາເຈົ້າ ກໍ່ຫວັງໃຫ້ອາຊຽນ ຫຼິ້ນບົດບາດຢ່າງເອົາຈິງເອົາຈັງ ໃນການຊ່ວຍເຫຼືອເຂົາເຈົ້າ ໃຫ້ຫຼຸດພົ້ນອອກຈາກ ຄວາມຫຼ້າຫລັງດ້ານເສດຖະກິດ. ໃນຖານະເປັນສະມາຊິກ ອາຊຽນ, ກຳປູເຈຍ ແລະ ລາວ ມອງເຫັນວ່າ ເຂົາເຈົ້າຈະສາມາດ ເຂົ້າຮ່ວມຢ່າງຫ້າວຫັນ ໃນການເຄື່ອນໄຫວຮ່ວມມືດ້ານຕ່າງໆ ຂອງອາຊຽນ ກໍຄື ໃນການຕິດຕໍ່ພົວພັນທາງສາກົນຢ່າງກວ້າງຂວາງ ຊຶ່ງອາຊຽນ ໄດ້ເສີມສ້າງຕະຫລອດມາໃນໄລຍະຫລາຍປີ ເພື່ອເຮັດໃຫ້ເຂົາເຈົ້າສາມາດຫຼຸດພົ້ນອອກຈາກຖານະແຫ່ງຄວາມຫຼ້າຫຼັງດ້ານເສດຖະກິດ.

ໃນຖານະເປັນປະເທດທີ່ຫຼ້າຫຼັງ ເກືອບວ່າ ຢູ່ໃນທຸກຂະແໜງຊີວິດ ເມື່ອທຽບໃສ່ບັນດາປະເທດໃກ້ຄຽງຂອງພວກຕົນຢູ່ ອາຊຽນ, ກຳປູເຈຍ ແລະ ລາວ ຫວັງວ່າ ອາຊຽນ ຈະໃຫ້ການພິຈາລະນາພິເສດ ແກ່ເຂົາເຈົ້າ ເພື່ອເຮັດໃຫ້ການເຂົ້າຮ່ວມຂອງເຂົາເຈົ້າ ໃນຂະບວນການດຳເນີນງານ ຂອງພາກພື້ນ ມີຄວາມສະດວກ ແລະ ງ່າຍຂຶ້ນ. ພິເສດ, ກຳປູເຈຍ ແລະ ລາວ ຕ່າງກໍ່ຫວັງວ່າ ອາຊຽນ ຈະຮັບຮູ້ວ່າ ທັງສອງປະເທດ ຕ້ອງການຊ່ວຍເຫຼືອຢ່າງຮີບດ່ວນ ເພື່ອແກ້ໄຂບັນຫາເຕັກນິກ ສະເພາະຈຳນວນນຶ່ງ.

ໃນຂະນະທີ່ ເຂົາເຈົ້າມີຈຸດພິເສດ ແລະ ຄວາມຕ້ອງການຫລາຍຢ່າງ ຄ້າຍຄືກັນ, ກຳປູເຈຍ ແລະ ລາວ ກໍ່ຍັງມີຄວາມມຸ່ງມາດປາດຖະ

ໜາ ທີ່ແຕກຕ່າງກັນ ກ່ຽວກັບການເຂົ້າເປັນສະມາຊິກ ອາຊຽນຂອງພວກ ຕົນ.

ສຳລັບກຳປູເຈຍ, ຄວາມຕ້ອງການອັນຮີບດ່ວນທີ່ສຸດ ໄດ້ແກ່ ການຟື້ນຟູສັນຕິພາບ ແລະ ສະຖຽນລະພາບ ພາຍໃນປະເທດ ແລະ ການປົວແປງເສດຖະກິດ ທີ່ຖືກລ້າງຜານ ໂດຍສົງຄາມ ອັນຍືດເຍື້ອຍາວ ນານ ແລະ ໄພພິບັດທຳມະຊາດ ທີ່ເກີດຂຶ້ນເລື້ອຍໆ ເຊັ່ນ: ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ. ກຳປູເຈຍ ໃຫ້ບູລິມະສິດ ແກ່ການສ້າງສາຍພົວພັນ ອັນດີກັບບັນດາປະເທດໃກ້ຄຽງ ຍ້ອນວ່າ ອັນນີ້ຈະຊ່ວຍເຮັດໃຫ້ການ ເມືອງພາຍໃນປະເທດ ມີຄວາມໝັ້ນຄົງ. ພ້ອມກັນນັ້ນ, ກຳປູເຈຍ ຍັງ ຫວັງວ່າ ການຮ່ວມມືພາຍໃນ ອາຊຽນ ເອງກໍຈະນຳໄປສູ່ການແບ່ງງານ ການຜະລິດໃຫ້ກວ້າງອອກກວ່າເກົ່າ ລະຫວ່າງບັນດາປະເທດ ສະມາຊິກ ດ້ວຍກັນ ອັນຈະໃຫ້ໂອກາດແກ່ ກຳປູເຈຍ ນຳໃຊ້ຢ່າງເປັນປະໂຫຍດ ບັນດາຂໍ້ສະດວກຂອງຕົນ ທີ່ມີມາແຕ່ດັ້ງເດີມ.

ສຳລັບລາວ, ການເຂົ້າເປັນສະມາຊິກອາຊຽນ ຈະໃຫ້ຄວາມ ຫວັງກ່ຽວກັບການແກ້ໄຂບັນຫາຕ່າງໆ ເນື່ອງຈາກທີ່ຕັ້ງ ທີ່ບໍ່ມີທາງອອກສູ່ ທະເລ ຂອງຕົນ. ມີຄວາມຫຍຸ້ງຍາກຫລາຍປະການ ດ້ານຄົມມະນາຄົມ ແລະ ການຂົນສົ່ງ ບໍ່ພຽງແຕ່ ລະຫວ່າງ ລາວ ກັບ ໂລກພາຍນອກ ຫາກ ຍັງ ຢູ່ພາຍໃນປະເທດ ອີກດ້ວຍ. ພ້ອມກັນນັ້ນ, ພູມີປະເທດຂອງລາວກໍ ປະກົດວ່າ ໄດ້ກີດກັນ ຄວາມສາມາດຂອງຕົນເອງ ທີ່ຈະໄດ້ຮັບຜົນປະ ໂຫຍດ ຈາກການພັດທະນາ ຊັບພະຍາກອນທາງທະເລ ໃນອານາຄົດ ຢູ່ ໃນທະເລຈີນໃຕ້.

ຍິ່ງໄປກວ່ານັ້ນ, ການເປັນສະມາຊິກ ອາຊຽນ ກໍ່ຍັງຈະໃຫ້ໂອ ກາດ ເພື່ອປັບປຸງຄືນແບບແຜນແຫ່ງຈິນຕະນາການ ແລະ ການເຮັດວຽກ ໃຫ້ມີຊີວິດຊີວາຍິ່ງຂຶ້ນ. ປະເທດລາວ ດຽວນີ້ ຫວັງທີ່ຈະຫັນອຸປະສັກ ດ້ານພູມີປະເທດຂອງຕົນ ໃຫ້ເປັນປະໂຫຍດ ທາງດ້ານຍຸດທະສາດ ໂດຍ

ໃຫ້ກາຍເປັນ "ຂົວຕໍ່ທາງບົກ" ລະຫວ່າງ ອາຊີ ອາຄະເນ ແລະ ຈີນ, ໂດຍໃຫ້ຕົນເອງຫັນປ່ຽນເປັນຕ່ອງໂສ້ ດ້ານຄົມມະນາຄົມ ແລະ ເສດຖະກິດ ລະຫວ່າງ ສອງເຂດ ທີ່ມີການຂະຫຍາຍຕົວໄວທີ່ສຸດ ໃນໂລກ ແລະ ດ້ວຍວິທີນີ້ ກໍ່ຈະເລັ່ງລັດຂະບວນການພັດທະນາ ເສດຖະກິດ ແລະ ສັງຄົມຂອງຕົນເອງ.

ໂດຍຮັບຮູ້ ຈຸດອ່ອນ ແລະ ຄວາມຕ້ອງການ ການຊ່ວຍເຫຼືອ ອັນຮີບດ່ວນຂອງພວກຕົນ, ທັງສອງປະເທດ ໄດ້ເນັ້ນໜັກວ່າ ເຂົາເຈົ້າຈະບໍ່ເປັນ ແລະ ກໍບໍ່ຢາກເປັນ ພາລະແບກຫາບໃຫ້ແກ່ ອາຊຽນ. ກໍາປູເຈຍ ແລະ ລາວ ຫວັງຢ່າງເຕັມທີ ແລະ ຢ່າງໜັກແໜ້ນ ທີ່ຈະປະກອບສ່ວນເຂົ້າໃນການຂະຫຍາຍຕົວ ຂອງອາຊຽນ ໃນອານາຄົດຫລາຍເທົ່າໃດ ກໍຍິ່ງດີ ດັ່ງດຽວກັນກັບຜົນປະໂຫຍດ ທີ່ເຂົາເຈົ້າຈະໄດ້ຮັບຈາກການເປັນສະມາຊິກຢູ່ໃນອາຊຽນ. ສໍາລັບທັງສອງປະເທດ, ການເຂົ້າເປັນສະມາຊິກຢູ່ໃນອາຊຽນ ແລະ ເຂດການຄ້າເສລີອາຊຽນ ຈະປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງຂອງຊາດ ແລະ ຂອງພາກພື້ນ.

24/VII
ຫ້າມຈຳໜ່າຍ

## ພາກທີ່ ສາມ

# ບັນດາຄຳແນະນຳທາງດ້ານນະໂຍບາຍ

### I.ຄວາມເປັນມາ ແລະ ບັນດາຫລັກການທົ່ວໄປ

ລັດຖະບານແຫ່ງ ລາຊະອານາຈັກ ກຳປູເຈຍ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ປະກາດຢ່າງບໍ່ມີເງື່ອນໄຂ ຄວາມໝາຍໝັ້ນ ທາງດ້ານການເມືອງຂອງພວກຕົນ ທີ່ຈະເຂົ້າຮ່ວມ ອາຊຽນ ແລະ ທັງສອງປະເທດຈະກາຍເປັນສະມາຊິກອາຊຽນ ໃນເດືອນ ກໍລະກົດ 1997. ນັບແຕ່ໄດ້ເຂົ້າຮ່ວມ ໃນຖານະຜູ້ສັງເກດການຂອງ ອາຊຽນ ທັງ ກຳປູເຈຍ ແລະ ລາວ ໄດ້ພັດທະນາການພົວພັນທີ່ມີຄຸນນະພາບໃໝ່ກັບອາຊຽນ. ເຖິງວ່າສະພາບສາຍພົວພັນທາງບວກນັ້ນ ໄດ້ປະກອບສ່ວນໃຫ້ແກ່ການເຂົ້າຮ່ວມອາຊຽນ ຂອງປະເທດທັງສອງ ດຳເນີນໄປໂດຍດີກໍຕາມ ແຕ່ກໍບໍ່ຄວນຖືເບົາບັນດາຄວາມຫຍຸ້ງຍາກ ແລະ ອຸປະສັກຕ່າງໆ ທີ່ປະເຊີນໜ້າຢູ່ບົນເສັ້ນທາງແຫ່ງການເຂົ້າຮ່ວມດັ່ງກ່າວ.

ດັ່ງທີ່ໄດ້ກ່າວມາແລ້ວ, ທັງ ກຳປູເຈຍ ແລະ ລາວ ຍັງນອນຢູ່ໃນບັນດາປະເທດທີ່ດ້ອຍພັດທະນາ ທາງດ້ານເສດຖະກິດ ແລະ ສັງຄົມຂອງໂລກ. ທັງສອງປະເທດ ຫາກໍ່ຫລຸດພົ້ນອອກຈາກຫລາຍທົດສະວັດແຫ່ງຄວາມຂັດແຍ່ງພາຍໃນ, ຄວາມລະເລີຍ, ຄວາມທົນທຸກທໍລະມານ ແລະ ຄວາມໂດດດ່ຽວ. ການກຳຈັດປັດເປົ່າຄວາມທຸກຍາກ ແລະ ພະຍາດທາງສັງຄົມທັງໝົດ ທີ່ເກີດຂຶ້ນຈາກສະພາບດັ່ງກ່າວ ຍັງເປັນພາລະກິດອັນສຳຄັນຍິ່ງຂອງລັດຖະບານທັງສອງ. ການພັດທະນາ ຖືກຂັດຂວາງໜ່ວງໜ່ຽວ ບໍ່ພຽງແຕ່ຍ້ອນຂາດເຂີນຊັບພະຍາກອນມະນຸດ ແລະທຶນຮອນ ແຕ່ຍັງຍ້ອນ ຢູ່ພາຍໃນປະເທດຍັງມີລະເບີດຝັງດິນ ແລະ ລະເບີດອື່ນໆ ຢ່າງຫລວງຫລາຍ. ຄວາມລະແວງສົງໃສ ແລະ ຄວາມເຂົ້າໃຈ

ພິດຕໍ່ກັນ ທີ່ຕົກທອດມາອັນເປັນຜົນຂອງປະຫວັດສາດແຫ່ງຄວາມຂັດແຍ່ງທີ່ຍືດເຍື້ອ ຍັງມີຢູ່ລະຫວ່າງບັນດາປະເທດເພື່ອນບ້ານ ຢູ່ໃນແຜ່ນດິນໃຫຍ່ ອາຊີ ອາຄະເນ. ກຳປູເຈຍ ແລະ ລາວ ແມ່ນລັດທີ່ກຳລັງຢູ່ໃນໄລຍະຂ້າມຜ່ານໄປສູ່ອານາຄົດທີ່ດີກວ່າເກົ່າ.

ເຖິງວ່າຈະມີອຸປະສັກເຫລົ່ານີ້ກໍ່ຕາມ ພວກເຮົາເຊື່ອໝັ້ນວ່າ ທັງກຳປູເຈຍ ແລະ ລາວ ມີອານາຄົດທີ່ດີຢູ່ໃນ ອາຊຽນ ແລະ ກັບ ອາຊຽນ. ນັບແຕ່ປີ 1986 ເປັນຕົ້ນມາປະເທດລາວ ໄດ້ດຳເນີນໂຄງການປະຕິຮູບພາຍໃນແບບກວມລວມ ໄປຕາມລະບົບເສດຖະກິດຕະຫລາດ ແລະ ໄດ້ເປີດ ກວ້າງການພົວພັນຂອງຕົນກັບນາໆປະເທດ ບົນພື້ນຖານແຫ່ງການສົ່ງເສີມ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື. ນັບແຕ່ການເລືອກຕັ້ງ ຈັດໂດຍ UNTAC ໃນປີ 1993 ເປັນຕົ້ນມາ ກຳປູເຈຍ ໄດ້ປະກອບລັດຖະບານແຫ່ງຄວາມປອງດອງຊາດຂຶ້ນ, ໄດ້ສ້າງຕັ້ງລະບອບການເມືອງປະຊາທິປະໄຕ ແລະ ເສດຖະກິດຕະຫລາດ. ປະເທດທັງສອງ ພ້ອມກັນຮັບເອົາຄວາມມຸ້ງມາດປາດຖະໜາ ແລະ ເປົ້າໝາຍຂອງອາຊຽນ.

ຕໍ່ຄວາມເປັນຈິງທາງປະຫວັດສາດ ທີ່ໄດ້ສະແດງອອກຄືດັ່ງກ່າວ, ເຖິງວ່າ ທັງກຳປູເຈຍ ແລະ ລາວ ຈະຢູ່ໃນທ່າເສຍປຽບ ເມື່ອທຽບກັບປະເທດເພື່ອນບ້ານອາຊຽນ, ພວກເຮົາກໍ່ເຊື່ອໝັ້ນວ່າ ປະເທດທັງສອງຈະສາມາດກາຍເປັນຄູ່ຮ່ວມມື ຢ່າງເທົ່າທຽມກັນໄດ້ໃນ ອາຊຽນ. ອາຊຽນ ແມ່ນປະຊາຄົມນຶ່ງ ທີ່ໄດ້ຮັບການກໍ່ຮ່າງສ້າງຕົວຂຶ້ນດ້ວຍການປະກອບສ່ວນຂອງບັນດາປະເທດສະມາຊິກ. ດ້ານດີກໍຄື ອາຊຽນ ສາມາດຊ່ວຍ ແລະ ລະດົມໃຫ້ບັນດາສະມາຊິກ ຊອກຊ່ອງທາງແກ້ໄຂເອົາເອງບັນຫາຕ່າງໆຂອງຕົນ. ໂດຍສອດຄ່ອງກັບແນວຄວາມຄິດນີ້ ແລະ ໂດຍການນຳໃຊ້ບົດຮຽນຂອງ ອາຊຽນ, ພວກເຮົາເຊື່ອໝັ້ນວ່າ ກຳປູເຈຍ ແລະ ລາວ ຢູ່ໃນທ່າທີສາມາດກ້າວເດີນໄປຂ້າງໜ້າໄດ້ສອງບາດກ້າວ.

ພວກເຮົາໄດ້ຢືນຢັນ, ຢູ່ໃນພາກທີ່ນຶ່ງຂອງບົດລາຍງານສະບັບນີ້ ເຖິງຄວາມໝາຍໝັ້ນຂອງພວກເຮົາທີ່ຈະສ້າງ ປະຊາຄົມ ອາຊີ ອາຄະເນ ໃຫ້ເປັນປະຊາຄົມນຶ່ງທີ່ມີຄວາມຫລາກຫລາຍ ປະກອບດ້ວຍບັນດາລັດທີ່ມີອະທິປະໄຕ ແລະ ຄວາມສະເໝີພາບຕິດພັນກັນ ດ້ວຍຈິດສຳນຶກແຫ່ງຊາຕາກຳ ແລະ ຄຸນຄ່າຮ່ວມກັນ (value), ມີສັນຕິພາບ ແລະ ຄວາມວັດທະນາຖາວອນ, ຊຶ່ງແມ່ນປະຊາຄົມນຶ່ງທີ່ຄວນບຸກບືນພະຍາຍາມໃຫ້ເປັນຈຸດນຶ່ງ ໃນເວທີສາກົນ ທີ່ມີຄວາມສຳຄັນ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ ແລະ ສິນທຳ ໃນສັດຕະວັດທີ່ 21.

ອາຊຽນ, ກຳປູເຈຍ ແລະ ລາວ ຈະຮ່ວມກັນປະເຊີນໜ້າກັບການທ້າທາຍອັນໃໝ່ ແລະ ສັບສົນເຫລົ່ານີ້ ດ້ວຍຄວາມເຊື່ອໝັ້ນ ແລະ ຄວາມຫວັງ ໃນການທີ່ຈະເຮັດໃຫ້ຜູ້ທີ່ຈະໄດ້ຮັບຜົນປະໂຫຍດໃນທີ່ສຸດຈາກ ອາຊີ ອາຄະເນ ທີ່ມີອິດສະຫລະພາບ ແລະ ເປັນອັນນຶ່ງອັນດຽວນັ້ນຕ້ອງແມ່ນຄົນອາຊີ ອາຄະເນໃນລຸ້ນຕໍ່ໆໄປ.

ເຖິງແນວໃດກໍ່ຕາມ ພວກເຮົາເຊື່ອໝັ້ນວ່າ ບັນດາຫລັກການທົ່ວໄປຕໍ່ໄປນີ້, ດັ່ງທີ່ກ່າວແລ້ວ ໃນພາກທີ່ນຶ່ງ ຂອງບົດລາຍງານສະບັບນີ້, ຕ້ອງເນັ້ນໃຫ້ເຫັນບັນດາຄຳແນະນຳທາງດ້ານນະໂຍບາຍສຳລັບ ກຳປູເຈຍ ແລະ ລາວ.

ນຶ່ງ, ຄຳແນະເຫລົ່ານີ້ ໄດ້ຖືເອົາທັດສະນະແຫ່ງການຮັບຜິດຊອບຮ່ວມກັນເປັນທິດນຳນັ້ນກໍຄື ບັນດາລັດສະມາຊິກ ຕ້ອງ ແລະ ຄວນມີບົດບາດຢ່າງເອົາຈິງເອົາຈັງ ເພື່ອຊ່ວຍເຫລືອສະມາຊິກໃໝ່.

ສອງ, ຄົນກຳປູເຈຍ ແລະ ຄົນລາວ ຈະເປັນຜູ້ວາງບັນດາບູລິມະສິດ ເນື່ອງຈາກທິດທາງ ແລະ ຈັງຫວະຂອງການພັດທະນາ ເສດຖະກິດ ແລະ ສັງຄົມຂອງຕົນໃນອານາຄົດ ຕ້ອງໃຫ້ແທດເໝາະທີ່ສຸດສຳລັບການສົ່ງເສີມ ພາລະກິດ ແຫ່ງການເຂົ້າຮ່ວມກັນ ຂອງພາກພື້ນອາຊຽນ

(ASEAN regionalism) ແລະ ເພື່ອແກ້ໄຂສິ່ງທ້າທາຍທີ່ໄດ້ກ່າວຂ້າງເທິງ.

ສາມ, ມີຄວາມຈຳເປັນທີ່ຈະນຳໃຊ້ບັນດາທ່າແຮງສະເພາະຂອງກຳປູເຈຍ ແລະ ລາວ ໃຫ້ຫລາຍທີ່ສຸດ ເພື່ອເປັນພາຫະນະນຶ່ງ ໃນການເລັ່ງລັດການພັດທະນາ ແລະ ການຍົກສູງການປະກອບສ່ວນຂອງຕົນຕໍ່ພາກພື້ນ.

ອີງຕາມຫລັກການເຫລົ່ານີ້ ພວກເຮົາເຊື່ອໝັ້ນວ່າ ກຳປູເຈຍ ແລະ ລາວ ຄວນໄດ້ຮັບການລະດົມໃຫ້ດຳເນີນມາດຕະການຕ່າງໆ ດັ່ງຕໍ່ໄປນີ້: ນຶ່ງ, ສືບຕໍ່ການປະຕິຮູບດ້ານສັງຄົມ, ເສດຖະກິດ ແລະ ກົດໝາຍຂອງຕົນໃນປະຈຸບັນ; ສອງ, ພິຈາລະນາການປະຕິຮູບອັນໃໝ່, ໂດຍການສະໜັບສະໜູນຂອງການພັດທະນາໂຄງລ່າງ, ໂດຍສະເພາະ ໃນສ່ວນທີ່ກ່ຽວຂ້ອງກັບຂະແໜງກະສິກຳຊົນນະບົດ ເພື່ອແກ້ໄຂຄວາມທຸກຍາກ ຢູ່ກັບທີ່ ແລະ ວາງພື້ນຖານໃຫ້ແກ່ການພັດທະນາເສດຖະກິດໃນໄລຍະຍາວ; ສາມ, ເພື່ອເຮັດໃຫ້ທ່າອ່ຽງໄປສູ່ລະບົບເສດຖະກິດຕະຫຼາດມີຄວາມໜັກແໜ້ນຂຶ້ນຕື່ມ ຕາມທິດນຳຂອງຫລັກການຕະຫຼາດ ເຊິ່ງໄດ້ຄຳນຶງເຖິງ “ໃບໜ້າຂອງສັງຄົມ” (Social face) ແລະ ຂອງການຊຸກຍູ້ໃຫ້ມີການສະສົມທຶນຮອນພາຍໃນ ແລະ ການລົງທຶນຂອງພາກເອກກະຊົນ ເຊິ່ງເປັນກົນຈັກຄູ່ກັນແຫ່ງການເຕີບໂຕ; ແລະ ສີ່, ສຸມໃສ່ພັດທະນາທ່າແຮງຢ່າງເຕັມສ່ວນຂອງປະຊາຊົນ (ກຳປູເຈຍ ແລະ ລາວ).

ຍິ່ງໄປກວ່ານັ້ນ, ກຳປູເຈຍ ແລະ ລາວ ຄວນໄດ້ຮັບການລະດົມໃຫ້ປັບປຸງການວາງບູລິມະສິດສຳລັບແຜນການ ແລະ ໂຄງການພັດທະນາຂອງຕົນ ໂດຍຄຳນຶງເຖິງເງື່ອນໄຂການແລກປ່ຽນ ເງິນຕາຕ່າງປະເທດໃນໄລຍະສັ້ນ ແລະ ປານກາງ ເພື່ອນຳໃຊ້ເຂົ້າໃນແຜນການພັດທະນາຂອງຕົນ.

*ໃນເວລາດຽວກັນ, ພວກເຮົາສະເໜີແນະວ່າ ໃນສະພາບເງື່ອນໄຂສະເພາະຂອງ ກຳປູເຈຍ ແລະ ລາວ, ບັນດາປະເທດສະມາຊິກປະຈຸບັນຂອງອາຊຽນ, ແຕ່ລະປະເທດ ແລະ ຮ່ວມກັນ, ຄວນເຂົ້າຮ່ວມພາລະກິດແຫ່ງການແຊກແຊງແບບສ້າງສັນ ( constructive intervention) ເຊິ່ງໝາຍເຖິງ, ໃນຂະນະທີ່ ຫລັກການບໍ່ແຊກແຊງຍັງມີຢູ່ ແລະ ຄວນໃຫ້ມີຕໍ່ໄປ, ຫລັກການພື້ນຖານ ໃນການດຳເນີນການພົວພັນລະຫວ່າງອາຊຽນ, ໃນເວລາທີ່ປະເທດທີ່ກ່ຽວຂ້ອງ ຕ້ອງການຄວາມຊ່ວຍເຫລືອ ແລະ ສະເໜີຂໍການຊ່ວຍເຫລືອນັ້ນ, ບັນດາປະເທດສະມາຊິກປະຈຸບັນຂອງອາຊຽນ ຄວນກຽມພ້ອມທີ່ຈະຫລິ້ນບົດບາດຫ້າວຫັນ ໃນການກຳຈັດຄວາມຫຍຸ້ງຍາກທັງສອງ ໃນໄລຍະສັ້ນ ແລະ ໄລຍະປານກາງ ທີ່ມີຕໍ່ການພັດທະນາ ແລະ ການເຂົ້າຮ່ວມເຄື່ອນໄຫວໃນພາກພື້ນຂອງກຳປູເຈຍ ແລະ ລາວ.*

ອີກດ້ານນຶ່ງ, ພວກເຮົາເຊື່ອວ່າ ການເຂົ້າຮ່ວມເຂດການຄ້າເສລີອາຊຽນ ຂອງ ກຳປູເຈຍ ແລະ ລາວ ຈະໃຫ້ປະໂຫຍດແກ່ປະເທດທັງສອງໃນໄລຍະຍາວ ແຕ່ກໍຄວນມີການປະເມີນຢ່າງເປັນປະຈຳ ແລະ ເປັນລະບົບ ກ່ຽວກັບຜົນກະທົບໃນໄລຍະສັ້ນ ຈາກການເຂົ້າຮ່ວມດັ່ງກ່າວ ແລະ ກ່ຽວກັບການກະກຽມ ຢ່າງເຕັມທີ່ໃນການຄວບຄຸມຜົນກະທົບດັ່ງກ່າວ. ຍ້ອນວ່າພື້ນຖານລາຍຮັບຂອງປະເທດທັງສອງຍັງຈຳກັດ ຈຶ່ງຄວນມີການເອົາໃຈໃສ່ເປັນພິເສດ ຕໍ່ການສູນເສຍລາຍຮັບ ທີ່ເກີດຈາກການເປີດການຄ້າເສລີ.

ໂດຍອີງຕາມບັນດາຫລັກການເຫລົ່ານີ້ ແລະ ບົນນ້ຳໃຈແຫ່ງຄວາມເປັນຄູ່ຮ່ວມມືກັນ, ພວກເຮົາຈຶ່ງສະເໜີບັນຊີຄຳແນະນຳຕ່າງໆທາງດ້ານນະໂຍບາຍ ສຳລັບ ກຳປູເຈຍ ແລະ ລາວ. ຍ້ອນຈິດສຳນຶກອັນສູງຕໍ່ຄວາມເຄັ່ງຮ້ອນ ທີ່ກ່ຽວພັນກັບບາງບັນຫາ, ຄຳແນະນຳເຫລົ່ານີ້ ຈຶ່ງໄດ້ຖືກແບ່ງອອກເປັນສອງປະເພດດ້ວຍກັນ ຄື: ປະເພດທີນຶ່ງ ປະກອບ

ດ້ວຍມາດຕະການຕ່າງໆອັນຮີບດ່ວນ ແລະ ທັນທີ ເຊິ່ງຄວນໄດ້ຮັບການປະຕິບັດໄວທີ່ສຸດເທົ່າທີ່ຈະໄວໄດ້ ເພື່ອກະກຽມໃຫ້ສອງປະເທດໄດ້ເຂົ້າອາຊຽນ ໃນເດືອນ ກໍລະກົດ 1997; ປະເພດທີສອງ ປະກອບດ້ວຍ ທາງເລືອກຕ່າງໆ ດ້ານນະໂຍບາຍໃນໄລຍະປານກາງ ເພື່ອ ເຮັດໃຫ້ພື້ນຖານການພັດທະນາ ຂອງປະເທດທັງສອງມີຄວາມໜັກແໜ້ນ ແລະ ທິດນຳຕ່າງໆ ສຳລັບນະໂຍບາຍໃນໄລຍະຍາວ ເຊິ່ງຈະນຳ ກຳປູເຈຍ ແລະ ລາວ ກ້າວເຂົ້າສູ່ສັງກາດແຫ່ງສັນຕິພາບ ແລະ ຄວາມສົມບູນພູນສຸກຮ່ວມກັບ ປະເທດອື່ນໆ ໃນອາຊີ ອາຄະເນ.

II. <u>ຄຳແນະນຳຕ່າງໆ</u>

ກ. <u>ຮີບດ່ວນ ແລະ ທັນທີ.</u>

ກຳປູເຈຍ ແລະ ລາວ ມີການເສຍປຽບ ຍ້ອນຂາດແຄນຊັບພະຍາກອນມະນຸດ ທີ່ສາມາດ ແລະ ທີ່ໄດ້ຮັບການຝຶກອົບຮົມມາແລ້ວ. ໃນຂະນະທີ່ ການແກ້ໄຂບັນຫານີ້ ແມ່ນເປົ້າໝາຍໄລຍະຍາວ ຂອງແຜນການໆສຶກສາ ແລະ ການຝຶກອົບຮົມຂອງລັດຖະບານ, ແຕ່ສະພາບການຂາດເຂີນບຸກຄະລາກອນໃນປະຈຸບັນ ໂດຍສະເພາະຢູ່ພາກລັດ ຈະເປັນອຸປະສັກຕໍ່ການເຂົ້າຮ່ວມໃນທຸກຂະບວນການຂອງອາຊຽນ. ແຕ່ໃດມາບຸກຄົນຊັ້ນສູງໃນສັງຄົມ ຂອງປະເທດທັງສອງເຄີຍປາກພາສາຝຣັ່ງ ແລະ ກໍປາກພາສາຝຣັ່ງ ໃນປະຈຸບັນ ແຕ່ຍ້ອນ ພາສາອັງກິດນັບມື້ມີຄວາມສຳຄັນ ໃນອາຊຽນ ແລະ ພາສາອັງກິດ ກໍ່ເປັນພາສາຫລັກ ໃນການຕິດຕໍ່ພົວພັນວຽກງານທາງການຂອງອາຊຽນ, ການເຂົ້າເປັນສະມາຊິກອາຊຽນຂອງ ກຳປູເຈຍ ແລະ ລາວ ໃນມໍ່ໆນີ້ ຈຶ່ງກາຍເປັນຄວາມກົດດັນ ຕໍ່ທັງສອງປະເທດໃຫ້ເລັ່ງລັດ ບໍ່ພຽງແຕ່ຮຽນພາສາອັງກິດ ແລະ ຄວາມຊຳນານດ້ານອື່ນໆ ແຕ່ຕ້ອງໄດ້ເຮັດໃຫ້ຂະແໜງການຕ່າງໆຂອງລັດ ທີ່ກ່ຽວພັນກັບ ອາຊຽນ ແລະ ເຂດການຄ້າເສລີອາຊຽນ ມີຄວາມເຂັ້ມແຂງຂຶ້ນ.

ມີທ້າຂີງເຂດພື້ນຖານ ຂອງການຊ່ວຍເຫລືອ ທີ່ໄດ້ຖືກເລືອກອອກມາ ໃຫ້ໄດ້ຮັບການເອົາໃຈໃສ່ຢ່າງຮີບດ່ວນ. ແຕ່ບາງອັນກໍ່ເປັນທີ່ຮູ້ຈັກກັນແລ້ວ ໃນເອກະສານຂອງກອງເລຂາອາຊຽນ ທີ່ມີຊື່ວ່າ "ທິດນຳໄປສູ່ການເປັນສະມາຊິກອາຊຽນ".

ພວກເຮົາສະເໜີແນະ ໃຫ້ແຜນການເຫລົ່ານີ້ ໄດ້ຮັບການປະຕິບັດ ກ່ອນການເຂົ້າເປັນສະມາຊິກອາຊຽນຢ່າງສົມບູນ ຂອງທັງສອງປະເທດ ໃນເດືອນ ກໍລະກົດ 1997.

## 1. ການຝຶກອົບຮົມພາສາອັງກິດ

ວຽກງານອັນຮີບດ່ວນ ແລະ ທັນທີ ແມ່ນການໃຫ້ການຝຶກອົບຮົມດ້ານພາສາອັງກິດແກ່ເຈົ້າໜ້າທີ ທີ່ມີຄວາມຮັບຜິດຊອບກ່ຽວຂ້ອງກັບວຽກງານອາຊຽນຢ່າງເປັນປະຈຳ. ການຝຶກອົບຮົມນີ້ ຄວນເປັນໄປໃນຮູບການໄລຍະສັ້ນ ເລັ່ງລັດໂດຍໃຫ້ເປີດສອນຢູ່ ບັນດາປະເທດອາຊຽນ ຫລື ໃນ ກຳປູເຈຍ ຫລື ລາວ. ໃນປະຈຸບັນກໍ່ມີຫລາຍແຜນການຝຶກອົບຮົມທຳນອງນີ້ ທີ່ພວມດຳເນີນຢູ່ ຊຶ່ງໄດ້ຮັບການຊ່ວຍເຫລືອຈາກບາງປະເທດອາຊຽນ ກໍ່ຄືປະເທດທີ່ສາມ ແຕ່ມີພະນັກງານຈຳນວນຈຳກັດໄດ້ເຂົ້າຮ່ວມ. ສະນັ້ນ ແຜນການຝຶກອົບຮົມດ້ານພາສາ ຄວນໄດ້ຮັບການຂະຫຍາຍອອກ ແລະ ປະສານສົມທົບກັນ ໂດຍໃຫ້ໄດ້ຮັບການສະໜັບສະໜູນຈາກຫລາຍປະເທດຂົ້ນຕົ້ນ ໃນອາຊຽນ ແລະ ໂດຍຜ່ານການສະໜັບສະໜູນຂອງປະເທດທີ່ສາມ.

## 2. ແຜນການຝຶກອົບຮົມທີ່ກ່ຽວພັນກັບ ອາຟຕາ.

ຝຶກອົບຮົມພະນັກງານຂອງລັດຖະບານ ເພື່ອພັດທະນາຄວາມສາມາດ ແລະ ຄວາມຊຳນິຊຳນານ ກ່ຽວກັບ ເຂດການຄ້າເສລີອາຊຽນເຮັດແນວໃດ ໃຫ້ທັງສອງປະເທດ ສາມາດໄດ້ຮັບຜົນປະໂຫຍດ ຈາກ

ການເຂົ້າຮ່ວມ ເຂດການຄ້າເສລີອາຊຽນ. ບູລິມະສິດຂອງແຜນການນີ້ ຄວນເນັ້ນໃສ່ການ ຝຶກອົບຮົມບຸກຄະລາກອນສັງກັດຢູ່ບັນດາກະຊວງ ທີ່ກ່ຽວຂ້ອງກັບການຜັນຂະຫຍາຍ ເຂດການຄ້າເສລີອາຊຽນ ເຊັ່ນ ກະຊວງການເງິນ (ກົມພາສີ ແລະ ອາກອນ) ແລະ ກະຊວງການຄ້າ.

ປະເທດລາວ ໄດ້ແຈ້ງໃຫ້ຊາບວ່າ ມີຄວາມຈຳເປັນອັນຮີບດ່ວນທີ່ຈະຕ້ອງຝຶກອົບຮົມເຈົ້າໜ້າທີ່ ຈຳນວນ 20 ຄົນ ຢູ່ທີ່ຫ້ອງການກົມພາສີທີ່ ວຽງຈັນ ແລະ ອີກ 30 ຄົນ ຢູ່ທີ່ດ່ານພາສີຕ່າງໆ 8 ບ່ອນ ຕາມຈຸດຊາຍແດນ. ການຝຶກອົບຮົມນີ້ ຈະເລັ່ງໃສ່ ການຕີລາຄາພາສີ, ການຈັດປະເພດສິນຄ້າ ສຳລັບເສຍພາສີໃຫ້ກົມກຽວກັນ. ໃບຢັ້ງຢືນຕົ້ນກຳເນີດການຜະລິດ, ການບໍລິຫານ GSP , ການເຮັດໃຫ້ກົດໝາຍ, ລະບຽບ ແລະ ຫລັກການ ມີຄວາມກົມກຽວກັນ, ການເປີດເສລີດ້ານການບໍລິການ, ການປ້ອງກັນສິດກ່ຽວກັບຊັບສິນທາງປັນຍາ ແລະ ອື່ນໆ. ສ່ວນກຳປູເຈຍ ກໍຮັບຮູ້ວ່າມີຄວາມຈຳເປັນອັນຮີບດ່ວນ ໃນກາຝຶກອົບຮົມຄ້າຍໆກັນ ໃຫ້ເຈົ້າໜ້າທີ່ຂອງຕົນ.

ໂຄງການຝຶກອົບຮົມນີ້ ຄວນກວມເອົາການໄປທັດສະນະສຶກສາຢູ່ບັນດາປະເທດ ອາຊຽນ ເພື່ອໃຫ້ເຈົ້າໜ້າທີ່ເຫລົ່ານີ້ໄດ້ຮຽນຮູ້ ກ່ອນອື່ນໝົດ ກ່ຽວກັບວິທີທີ່ບັນດາປະເທດສະມາຊິກຜັນຂະຫຍາຍ ໂຄງການວ່າດ້ວຍອັດຕາພາສີຜ່ອນຜັນ ທີ່ມີຜົນບັງຄັບໃຊ້ຮ່ວມກັນ ຂອງເຂດການຄ້າເສລີອາຊຽນ (AFTA-CEPT) .

3. ການຄົ້ນຄວ້າວິໄຈກ່ຽວກັບຜົນກະທົບຈາກການເຂົ້າຮ່ວມ ອາຟຕາ.

ອາຊຽນຄວນຊ່ວຍເຫລືອໃນການສຶກສາຄົ້ນຄວ້າ ກ່ຽວກັບຜົນກະທົບຈາກການເຂົ້າຮ່ວມ ເຂດການຄ້າເສລີອາຊຽນ ຕໍ່ເສດຖະກິດຂອງສອງປະເທດ ໂດຍສະເພາະ ໃນສ່ວນທີ່ກ່ຽວກັບການກະກຽມເຂົ້າຮ່ວມ, ການກຽມພ້ອມຂອງເຈົ້າໜ້າທີ່ຂອງລັດ ແລະ ການສູນເສຍລາຍ

ຮັບ, ທັງນີ້ກໍເພື່ອເຮັດໃຫ້ ກຳປູເຈຍ ແລະ ລາວ ສາມາດກະກຽມເຂົ້າເຂດການຄ້າເສລີອາຊຽນ ແລະ ເພື່ອຊ່ວຍເຫລືອເຂົາເຈົ້າໃນການເຈລະຈາ ກັບອາຊຽນ ໃນເງື່ອນໄຂຕ່າງໆ ຂອງການເຂົ້າຮ່ວມ ເຂດການຄ້າເສລີອາຊຽນ .

4. ການໂຄສະນາເຜີຍແຜ່ຂ່າວສານກ່ຽວກັບອາຊຽນ.

ບັນດາລັດຖະບານປະເທດອາຊຽນ, ໂດຍຜ່ານກອງເລຂາອາຊຽນ ແລະ ອົງການຈັດຕັ້ງຂອງລັດຖະບານ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ, ຄວນຈະໃຫ້ການອຸປະຖຳຈັດຕັ້ງການສຳມະນາ ແລະ ການຝຶກອົບຮົມກ່ຽວກັບອາຊຽນ ແລະ ການຮ່ວມມືໃນແງ່ຕ່າງໆ ດ້ານວິຊາການຂອງອາຊຽນ ໃຫ້ຫລາຍກວ່າເກົ່າ ເພື່ອ "ຝຶກອົບຮົມ" ບັນດາພະນັກງານ ແລະ ນັກຊ່ຽວຊານ ກໍຄື ເພື່ອໂຄສະນາເຜີຍແຜ່ຂ່າວສານເຫລົ່ານີ້ ຕໍ່ສາທາລະນະຊົນ ຢູ່ກຳປູເຈຍ ແລະ ລາວ.

5. ເອກະສານ ແລະ ການແປພາສາ.

ມີຄວາມຕ້ອງການອັນຮີບດ່ວນ ໃນການແປທຸກໆຂໍ້ຕົກລົງ, ຂໍ້ກຳນົດ, ລະບຽບການ ແລະ ເອກະສານອື່ນໆ ທີ່ກ່ຽວກັບອາຊຽນ ແລະ ເຂດການຄ້າເສລີອາຊຽນ ມາເປັນພາສາຂະແມ ແລະ ພາສາລາວ ເພື່ອເຮັດໃຫ້ພະນັກງານກຳປູເຈຍ ແລະ ລາວ ສາມາດເຂົ້າໃຈ ແລະ ປະຕິບັດບັນດາຂໍ້ຕົກລົງ ແລະ ລະບຽບການເຫລົ່ານັ້ນ ໃຫ້ຖືກຕ້ອງ, ກໍຄືເພື່ອໃຫ້ເປັນການສອດຄ່ອງກັບຫລັກການແຫ່ງການເປີດເຜີຍ (transparency) ໃນການຮ່ວມມືດ້ານເສດຖະກິດຂອງອາຊຽນ. ຄວາມພະຍາຍາມດັ່ງກ່າວ, ນອກຈາກສິ່ງອື່ນໆແລ້ວ, ຄວນຈະລວມເອົາສິ່ງດັ່ງຕໍ່ໄປນີ້:

(ກ) ບັນຊີຜົນຜະລິດ ພາຍໃຕ້ລະບົບອັດຕາພາສີຜ່ອນຜັນ ທີ່ມີຜົນບັງຄັບໃຊ້ຮ່ວມກັນ;

(ຂ) ລະບົບຂ່າວສານກ່ຽວກັບລາວ ແລະ ກຳປູເຈຍ ທີ່ ໄດ້ເຊື່ອມຕໍ່ກັບບັນດາປະເທດອາຊຽນ;

(ຄ) ການສ້າງລະບົບຂໍ້ມູນພາສີທີ່ກວມລວມ ຊຶ່ງຈະລວມເອົາການເຮັດແບບຟອມຕ່າງໆ ແລະ ເອກະສານດ້ານເຕັກນິກອື່ນໆ.

6. ການພັດທະນາຄວາມສາມາດຂອງບັນດາສະຖາບັນຕ່າງໆ.

ບັນດາປະເທດອາຊຽນ, ຈະແມ່ນປະເທດດຽວ ຫລື ຮ່ວມກັນຄວນໃຫ້ການຊ່ວຍເຫລືອ ສ້າງຂໍ້ລິເລີ້ມຢູ່ບ່ອນໃດທີ່ຈຳເປັນ ແລະ ເພື່ອປັບປຸງຢູ່ບ່ອນໃດ ທີ່ເໝາະສົມ ເຊັ່ນ ສະຖາບັນ ຫລື ອົງການຕ່າງໆ ຂອງລັດຖະບານ ຂອງທັງສອງປະເທດ ທີ່ກ່ຽວຂ້ອງກັບບັນຫາອາຊຽນ ແລະເຂດການຄ້າເສລີອາຊຽນ ເພື່ອແບ່ງເບົາຄວາມຫຍຸ້ງຍາກທາງດ້ານການເງິນ ໃນໄລຍະສັ້ນ ຂອງເຂົາເຈົ້າ. ມີຄວາມຕ້ອງການໃຫ້ການຊ່ວຍເຫລືອໃນຮູບການ ດັ່ງຕໍ່ໄປນີ້:

(ກ) ເຄື່ອງວັດຖຸອຸປະກອນຮັບໃຊ້ຫ້ອງການ ເຊັ່ນ: ຈັກອັດສຳເນົາເອກະສານ, ຈັກໂທລະພິມ, ເຄື່ອງຄອມພິວເຕີ ແລະໂທລະສັບ;

(ຂ) ການຝຶກອົບຮົມຂັ້ນພື້ນຖານ ໃນການນຳໃຊ້ເຄື່ອງຫ້ອງການທີ່ທັນສະໄໝດັ່ງກ່າວ; ແລະ

(ຄ) ໃນໄລຍະສາມປີທຳອິດ ຫລັງຈາກທີ່ ກຳປູເຈຍ ແລະ ລາວໄດ້ເຂົ້າເປັນສະມາຊິກອາຊຽນ, ປະເທດສະມາຊິກທີ່ເປັນເຈົ້າພາບຈັດກອງປະຊຸມ ຄວນໃຫ້ການຊ່ວຍເຫລືອຂັ້ນພື້ນຖານ ດ້ານການເດີນທາງ ແລະ ພັກເຊົາແກ່ພະນັກງານ ກຳປູເຈຍ ແລະ ລາວ ທີ່ເຂົ້າຮ່ວມກອງປະຊຸມຢ່າງເປັນທາງການຂອງອາຊຽນ. ຄວນໃຫ້ໂອກາດເຊັ່ນກັນແກ່ບັນດານັກ

ການທູດກຳປູເຈຍ ແລະ ລາວ ທີ່ປະຈຳການຢູ່ປະເທດ ເຊິ່ງເປັນເຈົ້າພາບຈັດກອງປະຊຸມ ໄດ້ເຂົ້າຮ່ວມກອງປະຊຸມທີ່ອຸປະຖຳໂດຍ ອາຊຽນ.

ຂ. ໄລຍະປານກາງ (1997-2000) ແລະ ໄລຍະຍາວ ( 2000-2100).

1. ສ້າງຕັ້ງສູນອາຊຽນນຶ່ງຂຶ້ນຢູ່ ກຳປູເຈຍ ເພື່ອດຳເນີນການຝຶກອົບຮົມ ຢ່າງເປັນລະບົບ ກ່ຽວກັບການຄຸ້ມຄອງສາທາລະນະ ແລະ ຄຸ້ມຄອງທຸລະກິດ, ກິດຈະກຳແປພາສາ ແລະ ການພິມ ລວມທັງສູນກາງຂ່າວສານ ແລະ ສະໜອງເອກະສານ.

2. ໃຫ້ທຶນສຶກສາຢູ່ສະຖາບັນການສຶກສາຂັ້ນສູງ ໃນບັນດາປະເທດອາຊຽນ ໃຫ້ແກ່ຄົນກຳປູເຈຍ ແລະ ຄົນລາວ ໃນຂະແໜງວິຊາ ການຄຸ້ມຄອງ, ເສດຖະກິດ, ວິສະວະກຳ, ເຕັກໂນໂລຊີ, ສະພາບແວດລ້ອມ, ສາທາລະນະສຸກ ແລະ ວິຊາອື່ນທີ່ເຫັນວ່າເໝາະສົມ.

3. ສ້າງຕັ້ງ ສູນຝຶກອົບຮົມ ພາສາອັງກິດຂອງອາຊຽນຢູ່ ທີ່ ວຽງຈັນ, ປະເທດລາວ ເພື່ອຝຶກອົບຮົມ ຄູອາຈານ ແລະ ຄູຝຶກພາສາອັງກິດພາສາທີສອງ ທັງນີ້ກໍເພື່ອໃຫ້ຄົນກຳປູເຈຍ ແລະ ຄົນລາວ ມີຄວາມສາມາດ ດຳເນີນການຝຶກອົບຮົມ ດ້ວຍຕົນເອງໄດ້.

4. ຊ່ວຍເຫລືອ ໃນຮູບການໃຫ້ທຶນການສຶກສາ ເພື່ອສິດສອນ ແລະ ຝຶກອົບຮົມຄົນກຳປູເຈຍ ແລະ ຄົນລາວ ຢູ່ບັນດາປະເທດອາຊຽນທາງດ້ານວິຊາສະເພາະ ທີ່ແຕກຕ່າງກັນ, ຮ່ວມທັງວິຊາສ້າງຄູ ແລະ ວິຊາຄຸ້ມຄອງການສຶກສາ.

5. ຊ່ວຍເຫລືອທາງດ້ານເຕັກນິກ ໃນການສ້າງຕັ້ງສູນຄົ້ນຄວ້າຮ່ວມ ຂອງກຳປູເຈຍ-ລາວ ກ່ຽວກັບ ອາຊຽນ ເພື່ອດຳເນີນການຄົ້ນຄວ້າ ແລະ ສິດສອນ ກ່ຽວກັບບັນດາປະເທດອາຊຽນ.

6. ຊ່ວຍອຸປະຖຳ ແລະ ສະໜອງຊ່ຽວຊານສຳລັບ:

(ກ) ສຶກສາວິໄຈກ່ຽວກັບເງື່ອນໄຂຕ່າງໆ ແລະ ຜົນກະທົບດ້ານການຂົນສົ່ງຂອງລາວຕາມທີ່ໄດ້ມີການຕົກລົງກັນ ໃນກອງປະຊຸມລະດັບລັດຖະມົນຕີ ອາຊຽນ ຫວ່າງບໍ່ດົນມານີ້ ເພື່ອຊ່ວຍເຫລືອລາວ ໃຫ້ກາຍເປັນປະເທດ “ເຊື່ອມຕໍ່ທາງໜ້າດິນ”;

(ຂ) ສຶກສາວິໄຈກ່ຽວກັບເງື່ອນໄຂຕ່າງໆ ດ້ານການຂົນສົ່ງ (ລວມທັງການນຳໃຊ້ເສັ້ນທາງແມ່ນ້ຳຂອງ) ແລະ ດ້ານໂທລະຄົມມະນາຄົມ ຢູ່ກຳປູເຈຍ;

(ຄ) ສຶກສາວິໄຈທ່າແຮງ ທາງດ້ານການທ່ອງທ່ຽວຮັກສາສະພາບແວດລ້ອມ ຢູ່ກຳປູເຈຍ ແລະ ລາວ. ປະເທດທັງສອງຕ້ອງການພັດທະນາການທ່ອງທ່ຽວ ໃຫ້ເປັນອຸດສະຫະກຳ ທີ່ສຳຄັນແຕ່ວ່າເປັນຫ່ວງຕໍ່ຜົນປະທົບຂອງການທ່ອງທ່ຽວ ຕໍ່ສະພາບແວດລ້ອມແລະ ຕໍ່ມໍລະດົກທາງດ້ານວັດທະນະທຳ ຂອງແຕ່ລະປະເທດ. ຍ້ອນເຄີຍມີບົດຮຽນອັນຮັ່ງມີໃນຂົງເຂດ ວຽກງານການທ່ອງທ່ຽວ, ການພັດທະນາສະຖານທີ່ພັກຜ່ອນ ແລະ ອຸດສາຫະກຳຮັບຕ້ອນແຂກ, ບັນດາປະເທດອາຊຽນ ສາມາດໃຫ້ການແນະນຳທີ່ຖືກຕ້ອງ; ລວມທັງການຝຶກອົບຮົມບຸກຄະລາກອນ ໃນຂົງເຂດວຽກງານອຸດສາຫະກຳການທ່ອງທ່ຽວ;

(ງ) ສຶກສາວິໄຈບົດຮຽນຂອງອາຊຽນ ກ່ຽວກັບການບັນເທົາຄວາມທຸກຍາກ ແລະ ຍຸດທະສາດ ເພື່ອລົບລ້າງຄວາມທຸກຍາກ ຢູ່ກຳປູເຈຍ ແລະ ລາວ. ບັນຫາຄວາມທຸກຍາກ ເປັນບັນຫາທີ່ໜັກໜ່ວງ ໂດຍສະເພາະຢູ່ເຂດພູດອຍ ແລະ ເຂດຊົນນະບົດຫ່າງໄກສອກຫລີກ. ການຖາງປ່າເຮັດໄຮ່ ຊຶ່ງແມ່ນແບບແຜນການດຳລົງຊີວິດ ທີ່ສຳຄັນຂອງປະຊາຊົນ ຢູ່ໃນຂົງເຂດທີ່ຫ່າງໄກ

ສອກຫລີກສືບຕໍ່ ນຳຜົນກະທົບ ຕໍ່ສະພາບແວດລ້ອມ. ນອກຈາກນີ້ ຄວາມບໍ່ເປັນລະບຽບ ຂອງລະບົບຊົນລະປະທານຍິ່ງເຮັດໃຫ້ເກີດນ້ຳຖ້ວມໃນລະດູຝົນ;

(ຈ) ສຶກສາວິໄຈທ່າແຮງທາງດ້ານຊັບພະຍາກອນ ຂອງກຳປູເຈຍ ແລະ ລາວ, ແນໃສ່ພັດທະນານະໂຍບາຍ ແລະ ຍຸດທະສາດ ທີ່ເໝາະສົມ ເພື່ອນຳເອົາຜົນປະໂຫຍດສູງສຸດແບບຍືນຍົງ ຈາກການພັດທະນາຊັບພະຍາກອນເຫລົ່ານັ້ນ;

(ສ) ສຶກສາວິໄຈກ່ຽວກັບລະເບີດຝັງດິນ ແລະ ລະເບີດທີ່ຍັງບໍ່ທັນແຕກ ຢູ່ກຳປູເຈຍ ແລະ ລາວ ແນໃສ່ແກ້ໄຂຢ່າງເປັນລະບົບບັນຫາ ແລະ ສິ່ງທ້າທາຍຕ່າງໆ ໃນການເກັບກູ້ລະເບີດຝັງດິນ ແລະ ການປ້ອງກັນ. ຖ້າວ່າ ບັນຫານີ້ ຫາກໄດ້ຮັບການແກ້ໄຂໃນອານາຄົດ ມັນຈະເຮັດໃຫ້ມີດິນສຳລັບປູກຝັງຫລາຍຂຶ້ນ ເພື່ອການພັດທະນາ ແລະ ເຮັດໃຫ້ມີຈຳນວນຄົນເສຍຊີວິດນ້ອຍລົງ.

ໃນໄລຍະປານກາງ, ຄວນມີການປຶກສາຫາລືກັນຕື່ມ ລະຫວ່າງບັນດາປະເທດສະມາຊິກອາຊຽນ ໃນປະຈຸບັນ ແລະ ສອງປະເທດທີ່ຈະເປັນສະມາຊິກ ກ່ຽວກັບການໃຊ້ຈ່າຍ ເພື່ອເຂົ້າຮ່ວມການເຄື່ອນໄຫວຂອງອາຊຽນ ຢ່າງເຕັມສ່ວນ.

ໃນໄລຍະຍາວ ຄວນໃຫ້ບູລິມະສິດແກ່ການຮ່ວມມືໃນຂົງເຂດຕໍ່ໄປນີ້ :

ທີໜຶ່ງ, ແມ່ນການ, ພັດທະນາກົນໄກ ຕະຫລາດເສລີ ເພື່ອຍົກສູງປະສິດທິພາບ ແລະ ຄວາມສາມາດແຂ່ງຂັນ ໃຫ້ແກ່ເສດຖະກິດຂອງກຳປູເຈຍ ແລະ ລາວ ໂດຍຄຳນຶງເຖິງ ຄວາມເປັນທຳ ແລະ ການສືບຕໍ່ຂະຫຍາຍຕົວ; ຢູ່ບ່ອນນີ້, ຄວນເອົາໃຈໃສ່ເປັນພິເສດ ຕໍ່ການສືບຕໍ່ການປະຕິຮູບ ທາງດ້ານສະຖາບັນ ແລະ ກົດໝາຍ, ສ້າງຕັ້ງລະບົບການ

ເງິນ ແລະ ທະນາຄານທີ່ໝັ້ນຄົງ ລວມທັງລະບົບອາກອນພາຍໃນທີ່ຈຳເປັນ, ລະບົບເງິນຕາ ແລະ ການສະສົມ, ສົ່ງເສີມກິດຈະການຂອງພາກສ່ວນເອກະຊົນພາຍໃນ ແລະ ລະດົມການລົງທຶນໂດຍກົງ "ຢ່າງມີຄວາມຮັບຜິດຊອບ" ຈາກພາກສ່ວນເອກະຊົນຕ່າງປະເທດ, ໂດຍສະເພາະຈາກບັນດາປະເທດອາຊຽນ.

ທີ ສອງ, ແມ່ນການພັດທະນາຊັບພະຍາກອນມະນຸດ, ຊຶ່ງຈະພົວພັນເຖິງ ບໍ່ພຽງແຕ່ການຂະຫຍາຍ ແລະ ປັບປຸງການສຶກສາສາມັນຂັ້ນປະຖົມ ແລະ ໃນລະດັບຄວາມຊຳນິຊຳນານເທົ່ານັ້ນ ແຕ່ຍັງສືບຕໍ່ສິດສອນຜູ້ທີ່ດ້ອຍການສຶກສາ ແລະ ນັກວິຊາຊີບ ຫລືວ່າ ຝຶກແອບກຳມະກອນກັບທີ່ຢູ່ບ່ອນທຳງານ. ຄວນມີການຊຸກຍູ້ບົດບາດ ຂອງພາກສ່ວນເອກະຊົນໃນຂົງເຂດນີ້.

ທີ ສາມ, ແມ່ນການພັດທະນາພື້ນຖານໂຄງລ່າງ, ຊຶ່ງໃນນີ້ພາລະບົດບາດຂອງພາກສ່ວນເອກະຊົນ. ຄວນໄດ້ຮັບການສົ່ງເສີມຢ່າງເອົາຈິງເອົາຈັງ.

ທີ ສີ່, ແມ່ນການຮ່ວມມື ໃນການພັດທະນາຂະແໜງການຕ່າງໆເຊັ່ນ: ກະສິກຳ, ການປັ່ນພະລັງງານໄຟຟ້າ ແລະ ການຜະລິດຈາກຊັບພະຍາກອນພື້ນຖານ ຊຶ່ງ ກຳປູເຈຍ ແລະ ລາວ ຕ່າງກໍຢູ່ໃນທ່າທີຈະໄດ້ຮັບຜົນປະໂຫຍດເທົ່າທຽມກັນ. ຄວນມີການພິຈາລະນາເໝືອນກັນ ກ່ຽວກັບການຍົກຍ້າຍໂຮງງານອຸດສະຫະກຳ ຈາກບັນດາປະເທດອາຊຽນ ຊຶ່ງບໍ່ມີຄວາມສະດວກຕໍ່ໄປອີກ ໃນການຊອກຫາຊັບພະຍາກອນມາປ້ອນໄປສູ່ ກຳປູເຈຍ ແລະ ລາວ.

ທີ ຫ້າ, ແມ່ນການພັດທະນາຕາໜ່າງສາຍໄຟຟ້າຂ້າມຊາດ ຊຶ່ງຈະເພີ່ມລາຍຮັບເປັນເງິນຕາຕ່າງປະເທດ ໃຫ້ແກ່ປະເທດທັງສອງ ແລະຊ່ວຍເລັ່ງຂະບວນການພັດທະນາໃຫ້ໄວຂຶ້ນ ແລະ ສົ່ງເສີມການລວມຕົວເຂົ້າກັບປະເທດໃກ້ຄຽງ.

ທີ ທີກ, ແມ່ນການສົ່ງເສີມການຮ່ວມມືສອງຝ່າຍ ລະຫວ່າງສອງ ປະເທດ ຊຶ່ງເຄີຍມີສາຍພົວພັນ ແບບໃກ້ຊິດ ແລະ ຖານເພື່ອນມິດກັນມາ ແຕ່ດົນນານແລ້ວ ແລະ ລະຫວ່າງປະເທດທັງສອງ ກັບປະເທດອາຊຽນ ໃກ້ຄຽງ ເພື່ອເສີມສ້າງ ສັນຕິພາບ ແລະ ຄວາມວັດທະນາຖາວອນ ໃນ ພາກພື້ນຂົ້ນຕື່ມ. ຄວນປັບປຸງກົນໄກການພົວພັນສອງຝ່າຍ ທີ່ມີຢູ່ໃນປະ ຈຸບັນໃຫ້ດີຂຶ້ນ ແລະ ຢູ່ບ່ອນໃດທີ່ເຫັນວ່າຈຳເປັນ ແລະ ເໝາະສົມກໍ່ ຄວນມີການສ້າງອັນໃໝ່ຂຶ້ນ.

ນອກຈາກບູລະມະສິດເຫລົ່ານີ້ ຊຶ່ງເປັນທີ່ເໝາະສົມກັບທັງ ກຳ ປູເຈຍ ແລະ ລາວ ແລ້ວ, ຍັງມີທິດທາງນະໂຍບາຍອື່ນອີກ ທີ່ເໝາະສົມ ກັບແຕ່ລະປະເທດ ແຕກຕ່າງກັນ ດັ່ງນີ້ :

ສຳລັບ ກຳປູເຈຍ, ຄວນມີມາດຕະການອັນຮີບດ່ວນ ເພື່ອສົ່ງ ເສີມການຮ່ວມມື ໃນການປົກປັກຮັກສາ ແລະ ເສີມຂະຫຍາຍມູນມໍລະ ດົກອັນຮັ່ງມີ ທາງດ້ານວັດທະນະທຳ ຂອງກຳປູເຈຍ ລວມທັງ ການປົກ ປ້ອງຮັກສາຊັບສົມບັດຂອງຊາດ ຈາກການນຳໃຊ້ຫາຜົນປະໂຫຍດ ທາງ ການຄ້າຢ່າງຂາດຈິດສຳນຶກ. ມູນມໍລະດົກອັນນີ້ ແມ່ນການປະກອບສ່ວນ ອັນລ້ຳຄ່າ ແລະ ບໍ່ມີອັນປຽບທຽບໄດ້ ຂອງກຳປູເຈຍ ເຂົ້າໃນພາລະກິດ ແຫ່ງຄວາມເປັນເອກະລັກທາງດ້ານວັດທະນະທຳ ແລະ ການຮ່ວມພາກ ພື້ນດຽວກັນ ຂອງອາຊີອາຄະເນ. ມໍລະດົກນີ້ ບໍ່ພຽງແຕ່ເປັນສິ່ງທີ່ຕົກ ທອດມາ ອັນມີຄ່າຢູ່ໃນຕົວຂອງມັນເທົ່ານັ້ນ ແຕ່ຍັງເປັນອະນຸສອນແຫ່ງ ການຍືນຍົງຄົງຕົວ ແລະ ຄວາມເຂັ້ມແຂງຂອງສົມບັດລວມດ້ານວັດທະ ນະທຳໃນອາດີດ ແລະ ປະຈຸບັນຂອງພາກພື້ນ. ມໍລະດົກທາງດ້ານວັດທະ ນະທຳນີ້ ເປັນພື້ນຖານອັນແໜ້ນແກ່ນ ໃຫ້ແກ່ການສ້າງອານາຄົດຂອງ ພາກພື້ນ.

ສຳລັບລາວ, ຄວນມີມາດຕະການ ເພື່ອສົ່ງເສີມການຮ່ວມມື ໃນ ການປົກປ້ອງ ແລະ ຂະຫຍາຍສິດທິອັນຊອບທຳ ໃນຖານະເປັນປະເທດ

ທີ່ບໍ່ມີທາງອອກສູ່ທະເລ, ດັ່ງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍສາກົນຫຼາຍໆ ສະບັບທີ່ແຕກຕ່າງກັນ. ຄວນເອົາໃຈໃສ່ເປັນພິເສດ ຕໍ່ຄວາມຫ່ວງໃຍ ຂອງລາວ ໃນດ້ານການຄົມມະນາຄົມ ແລະ ການຂົນສົ່ງ ຜ່ານປະເທດ ເພື່ອນບ້ານໃກ້ຄຽງ ເພື່ອມີທາງອອກສູ່ທະເລ. ຍິ່ງກວ່ານັ້ນ, ຖ້າວ່າບັນຫາ ການພັດທະນາຊັບພະຍາກອນທາງທະເລຮ່ວມກັນ .ຢູ່ທະເລຈີນໃຕ້ ມີ ຄວາມຄືບໜ້າ, ກໍ່ຄວນມີການປຶກສາຫາລືກັນ ກ່ຽວກັບການຊອກຫາ ຊ່ອງທາງ ແລະ ວິທີທາງ ເພື່ອຮັບປະກັນ ໃຫ້ລາວໄດ້ຮັບຜົນປະໂຫຍດ ຈາກການພັດທະນາດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສາກົນ. ຕໍ່ ກຳປູເຈຍ ກໍ່ຄວນໄດ້ຮັບການປະຕິບັດເຊັ່ນດຽວກັນ.

ຍິ່ງໄປກວ່ານັ້ນ, ຄວນຄົ້ນຄວ້າເບິ່ງ ຄວາມອາດສາມາດໃນການ ຊ່ວຍເຫລືອລາວ ເພື່ອຫັນປ່ຽນຈາກການມີຂໍ້ຈຳກັດດ້ານທີ່ຕັ້ງພູມສາດ ມາເປັນການໄດ້ປຽບທາງດ້ານຍຸດທະສາດ ໂດຍການສົ່ງເສີມບົດບາດ ໃຫ້ເປັນ "ຂົວຕໍ່ພາກພື້ນດິນ" (Land Bridge) ລະຫວ່າງ ອາຊີອາ ອາຄະ ເນ, ບາງທີກໍອາດຜ່ານກຳປູເຈຍ, ແລະ ພາກໃຕ້ຂອງຈີນ. ຢູ່ບ່ອນນີ້, ດ້ານນຶ່ງ ຄວນສົ່ງເສີມການຮ່ວມມືຢ່າງເອົາຈິງເອົາຈັງ ລະຫວ່າງ ກຳປູ ເຈຍ ແລະ ລາວ ອີກດ້ານນຶ່ງ ລະຫວ່າງສອງປະເທດນີ້ ກັບປະເທດສະ ມາຊິກອາຊຽນໃນປັດຈຸບັນ, ໃນການພັດທະນາໂຄງລ່າງ ແລະ ການສ້າງ ເຂດຈະເລີນເຕີບໂຕຢູ່ອະນຸພາກພື້ນ ແມ່ນ້ຳຂອງ.

# ສະມາຊິກ ຂອງ ໜ່ວຍຄົ້ນຄວ້າ ກ່ຽວກັບ ກຳປູເຈຍ ແລະ ລາວ

1. ພະນະທ່ານ ກຽດ ຈິນ (KET CHHỌN)
   ລັດຖະມົນຕີ ອາວຸໂສ ຮັບຜິດຊອບ ການຟື້ນຟູ ແລະ ການພັດທະນາ ແລະ ລັດຖະມົນຕີວ່າການກະຊວງເສດຖະກິດ ແລະ ການເງິນ, ລາຊະອານາຈັກ ກຳປູເຈຍ

2. ຕັນ ສີຣີ ດາໂຕະ ມູຊາ ບິນ ຮິຕາ
   (TAN SRI DATO' MUSA BIN HITAM)
   ທູດພິເສດຂອງ ນາຍົກລັດຖະມົນຕີ,
   ແລະ ອະດີດ ຮອງນາຍົກ ລັດຖະມົນຕີ, ມາເລເຊຍ

3. ພະນະທ່ານ ອຸງ ຮວດ (UNG HUOT)
   ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ການຮ່ວມມືສາກົນ, ລາຊະອານາຈັກ ກຳປູເຈຍ

4. ພະນະທ່ານ ໂຈເຊ ທ.ອານມົງເຕ
   ( H.E.JOSE T. ALMONTE )
   ທີ່ປຶກສາຝ່າຍຄວາມໝັ້ນຄົງຂອງປະທານາທິບໍດີ, ແລະ ອຳນວຍການໃຫຍ່, ສະພາຄວາມໝັ້ນຄົງແຫ່ງຊາດ, ຟີລິບປິນ

5. ພະນະທ່ານ ພົງສະຫວັດ ບຸບຜາ
( PHONGSAVAT BOUPHA)
ຮອງລັດຖະມົນຕີ ກະຊວງການຕ່າງປະເທດ,
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

6. ພະນະທ່ານ ນາງ ເຂັມແພງ ພົນເສນາ
(KHEMPHENG PHOLSENA)
ຮອງລັດຖະມົນຕີ, ສຳນັກງານນາຍົກລັດຖະມົນຕີ,
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

7. ຫງວຽນ ເກີ ແທກ (NGUYEN CO THACH)
ອະດີດຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີ
ວ່າການກະຊວງການຕ່າງປະເທດ,
ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

8. ດຣ. ເຈຊຸສ ເອສຕານິສລາວ (Dr. JESUS ESTANISLAO)
ປະທານ, ມະຫາວິທະຍາໄລ ອາຊີ ແລະ ປາຊີຟິກ, ແລະ
ອະດີດ ລັດຖະມົນຕີກະຊວງການເງິນ, ຟີລິບປິນ

9. ດຣ. ວິຣະວົງ ຣາມັງກູນ
(Dr. VIRABONGSE RAMANGKURA)
ສະມາຊິກສະພາສູງ, ແລະ ອະດີດ ລັດຖະມົນຕີ
ກະຊວງການເງິນ, ປະເທດໄທ

10. ໂຮ ກວົນ ປິນ (HO KWON PIN)
ປະທານ, ບໍລິສັດ ພະລັງງານ ສິງກະໂປ ຈຳກັດ

11. ເອກອັກຄະລັດຖະທູດ ຊາບຳ ເຊຍຈຽນ
(SABAM SIAGIAN)
ທີ່ປຶກສາ, ໜັງສືພິມ ຈາກາກຕາ ໂປສທ໌, ອິນໂດເນເຊຍ

12. ໝ່ອມລາຊະວົງ ສຸຂຸມພັນ ປາຣິພາດ
(M.R. SUKHUMBHAND PARIBATRA)
ປະທານ, ມູນນິທິ ຊຸມພົດ ພັນທິບ, ປະເທດໄທ ແລະ
ປະທານ, ໜ່ວຍສຶກສາຄົ້ນຄວ້າ ກ່ຽວກັບ ກຳປູເຈຍ ແລະ ລາວ

13. ທ່ານ ຣາຊາ ເຣັດນຳ (M. RAJARETNAM)
ນັກຄົ້ນຄວ້າອາວຸໂສ, ສະຖາບັນຄົ້ນຄວ້າການເມືອງ,
ມາເລເຊຍ, ແລະ ຜູ້ຈັດຕັ້ງ, ໜ່ວຍສຶກສາຄົ້ນຄວ້າ ກ່ຽວກັບ
ກຳປູເຈຍ ແລະ ລາວ

14. ນາງ ປົກ ມາຣີນາ (POK MARINA)
ຮອງລັດຖະມົນຕີ, ກະຊວງການຕ່າງປະເທດ ແລະ
ການຮ່ວມມືສາກົນ, ລາຊະອານາຈັກ ກຳປູເຈຍ

15. ດຣ. ອຸນ ພອນ ມະນີຣົດ (AUN PORN MONIROTH)
ເຈົ້າໜ້າທີ່ອາວຸໂສເສດຖະກິດ, ກະຊວງເສດຖະກິດ ແລະ ການເງິນ, ແລະ ທີ່ປຶກສາ ຂອງລັດຖະມົນຕີຮັບຜິດຊອບວຽກງານ ຟື້ນຟູ ແລະ ການພັດທະນາ, ລາຊະອານາຈັກ ກຳປູເຈຍ

16. ດຣ. ຊາຍນານ ອາຊນາມ ຢູຊອບ
(ZAINAL AZNAM YUSOF)
ຮອງຫົວໜ້າກົມ (ເສດຖະກິດ)
ສະຖາບັນ ຄົ້ນຄວ້າ ຍຸດທະສາດ ແລະ ສາກົນ, ມາເລເຊຍ

17. ດຣ. ເດວີ ຟໍຕູນາ ອານວາ (DEWI FORTUNA ANWAR)
ນັກຄົ້ນຄວ້າ, ສູນຄົ້ນຄວ້າ ການເມືອງ ແລະ ພາກພື້ນ
ຈາການຕາ, ອິນໂດເນເຊຍ

24/VII

18. ດຣ. ກາໂຣລີນາ ແຮນັງເດສ (CAROLINA HERNANDEZ)
ປະທານ, ສະຖາບັນ ຄົ້ນຄວ້າຍຸດທະສາດ ແລະ ການພັດທະນາ
ມະນີລາ, ຟີລິບປິນ

19. ກາວ ກິມ ຮວນ (KAO KIM HOURN)
ອຳນວຍການຝ່າຍບໍລິຫານ, ສະຖາບັນເພື່ອການຮ່ວມມື ແລະ ສັນຕິພາບ ຂອງ ກຳປູເຈຍ ແລະ ທີ່ປຶກສາຂອງ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ການຮ່ວມມືສາກົນ, ລາຊະອານາຈັກ ກຳປູເຈຍ

20. ວົງໄຊ ວິໄຊດ (VONGSEY VISSOTH)
ຮອງຫົວໜ້າກົມ, ກົມເງິນຕາຕ່າງປະເທດ
ກະຊວງເສດຖະກິດ ແລະ ການເງິນ,
ລາຊະອານາຈັກ ກໍາປູເຈຍ

21. ຮົງ ຮຸງ ຢົງ (HGN HUNG YONG)
ນັກຄົ້ນຄວ້າອາວຸໂສ, ສະຖາບັນ ຄົ້ນຄວ້ານະໂຍບາຍ,
ມາເລເຊຍ

22. ໄຊຍະການ ສີສຸວົງ (SAYAKANE SISOUVONG)
ຮອງຫົວໜ້າກົມອາຊຽນ, ກະຊວງການຕ່າງປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

23. ສົມຈິດ ອິນທະມິດ (SOMCHIT INTHAMITH)
ຮອງຫົວໜ້າກົມ ຮ່ວມມືເສດຖະກິດສາກົນ, ສໍານັກງານນາຍົກ
ລັດຖະມົນຕີ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

24. ດຣ. ຂຽນ ພັນສຸຣິວົງ (KHIANE PHANSOURIVONG)
ນັກຄົ້ນຄວ້າ, ສະຖາບັນການຕ່າງປະເທດ, ກະຊວງການຕ່າງ
ປະເທດ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

25. ຫງວຽນ ຈຸງ ທັນ (NGUYEN TRUNG THANH)
ຮອງຫົວໜ້າກົມອາຊຽນ, ກະຊວງການຕ່າງປະເທດ
ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

# ສະຖາບັນທີ່ໃຫ້ການສະໜັບສະໜູນ
# ແກ່ໜ່ວຍສຶກສາຄົ້ນຄວ້າ
# ກ່ຽວກັບ ກຳປູເຈຍ ແລະ ລາວ

1. ສະຖາບັນຄົ້ນຄວ້ານະໂຍບາຍ, ມາເລເຊຍ
2. ສູນການຂ່າວ ແລະ ຊັບພະຍາກອນ, ສິງກະໂປ
3. ມູນນິທິ ຊຸມພົດ ພັນທິບ, ໄທ
4. ສະຖາບັນເພື່ອການພັດທະນາ ແລະ ສັນຕິພາບ
   ຂອງກຳປູເຈຍ, ລາຊະອານາຈັກ ກຳປູເຈຍ
5. ສະພາຄວາມໝັ້ນຄົງແຫ່ງຊາດ, ຟີລິບປິນ
6. ກະຊວງການຕ່າງປະເທດ ແລະ ການຮ່ວມມືສາກົນ,
   ລາຊະອານາຈັກ ກຳປູເຈຍ
7. ກະຊວງເສດຖະກິດ ແລະ ການເງິນ,
   ລາຊະອານາຈັກ ກຳປູເຈຍ
8. ກະຊວງການຕ່າງປະເທດ, ສ.ປ.ປ.ລາວ

# ບັນຊີຄຳຫຍໍ້

AFTA = ASEAN FreeTrade Area
ເຂດການຄ້າເສລີ ອາຊຽນ

APEC = Asia-Pacific Economic Cooperation
ກອງປະຊຸມວ່າດ້ວຍການຮ່ວມມືດ້ານເສດ
ຖະກິດ ໃນອາຊີ-ປາຊີຟິກ

SGCL = Study Group on Cambodia and Laos
ໜ່ວຍຄົ້ນຄວ້າກ່ຽວກັບ ກຳປູເຈຍ ແລະ ລາວ

ARF = ASEAN Regional Forum
ເວທີປຶກສາຫາລື ພາກພື້ນ ອາຊຽນ

ASEM = Asia-Europe Meeting
ກອງປະຊຸມສຸດຍອດ ອາຊີ-ເອີຣົບ

UNTAC = United Nations Transitional Authority in Cambodia
ອຳນາດປົກຄອງຊົ່ວຄາວຂອງອົງການ ສະຫະປະຊາ
ຊາດ ທີ່ ກຳປູເຈຍ

GSP = General System of Preference
ສິດຜ່ອນຜັນດ້ານການຄ້າທົ່ວໄປ

CEPT = Common Effective Preferential Tariff
ອັດຕາພາສີຜ່ອນຜັນທີ່ມີຜົນບັງຄັບໃຊ້ຮ່ວມກັນ